ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-27 ຕຸລາ 2022
ປີທີ 11
ສະບັບທີ 886

## ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຮັບໃບປະລິນຍາດຸສະດີບັນດິດກິດຕິມະສັກ ສາຂາພຸດທະສາສະໜາ



(ສພຊ) ໃນວັນທີ 24 ຕຸລາ 2022 ທີ່ຫໍສະພາແຫ່ງຊາດ ນະຄອນຫລວງວຽງຈັນ ໄດ້ມີພິທີມອບ ໃບປະລິນຍາດຸສະດີບັນດິດກິດຕິມະສັກ ສາຂາພຸດທະສາສະໜາ ມະຫາວິທະຍາໄລມະຫາຈຸລາລົງກອນຣາຊະວິທະຍາໄລ ແຫ່ງ ຣາຊະອານາຈັກໄທ ແກ່ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ.

ໂອກາດດັ່ງກ່າວ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໃນໂອກາດຮັບປະລິນຍາດຸສະດີບັນດິດກິດຕິມະສັກ ວ່າ: ນ້ອມນະມັດສະການ ພຣະອາຈານໃຫຍ່ ເຫວດ ມະເສໄນ ຮອງປະທານສູນກາງອົງການພຸດທະສາສະໜາສຳພັນລາວ ທີ່ເຄົາລົບ; ພຣະອາຈານໃຫຍ່ເຈົ້າຄຸນ ຮອງອະທິການບໍດີມະຫາວິທະຍາໄລ ມະຫາຈຸລາລົງກອນຣາຊະວິທະຍາໄລ ພ້ອມດ້ວຍພຣະເຖລາ-ນຸເຖລະ ທີ່ເຄົາລົບ; ບັນດາທ່ານຈາກກະຊວງ-ອົງການ, ບັນດາທ່ານ ທີ່ນັບຖື ແລະ ຮັກແພງ. ຂ້າພະເຈົ້າ ມີຄວາມພາກພູມໃຈ ແລະ ຖືເປັນກຽດຢ່າງສູງ ທີ່ສະພາມະຫາວິທະຍາໄລ ມະຫາຈຸລາລົງກອນຣາຊະວິທະຍາໄລ ໄດ້ມີມະຕິຕົກລົງມອບໃບປະກາດປະລິນຍາ ດຸສະດີບັນດິດ ກິດຕິມະສັກ ສາຂາພຸດທະສາສະໜາ ໃຫ້ແກ່ຂ້າພະເຈົ້າໃນມື້ນີ້. ຂ້າພະເຈົ້າຕີລາຄາສູງຕໍ່ການມອບໃບປະລິນຍາດັ່ງກ່າວນີ້ ເພາະຖືວ່າເປັນກຽດ ແລະ ເປັນການໃຫ້ກຳລັງໃຈແກ່ຂ້າພະເຈົ້າ ໃນການປະກອບສ່ວນຊຸກຍູ້ ແລະ ສົ່ງເສີມວຽກງານທາງພຸດທະສາສະໜາສືບຕໍ່ໄປ.

ຂ້າພະເຈົ້າໄດ້ຮັບຮູ້ວ່າ ມະຫາວິທະຍາໄລ ມະຫາຈຸລາລົງກອນ ຣາຊະວິທະຍາໄລ ເປັນສະຖາບັນການສຶກສາ ທີ່ມີຊື່ສຽງກຽດຕິຄຸນຢູ່ໃນປະເທດໄທ ມີຄວາມໂດດເດັ່ນໃນການກໍ່ສ້າງ-ບຳລຸງ ບຸກຄະລາກອນສົງ ແລະ ຄາລະວາດ ຜູ້ມີຄວາມສົນໃຈສຶກສາຮໍ່າຮຽນທາງດ້ານພຸດທະສາສະໜາ. ໃນຫລາຍ

ອ່ານຕໍ່ໜ້າ 2

## ຄະນະມິດຕະພາບລັດຖະສະພາ ລາວ-ຣັດເຊຍ ພົບປະສອງຝ່າຍ



(ສພຊ) ເພື່ອເປັນການຜັນຂະຫຍາຍການພົບປະທາງໄກ ລະຫວ່າງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ທ່ານ ນາງ ວາເລັນຕິນາ ມັດວຽນໂກ ປະທານສະພາສູງແຫ່ງ ສະຫະພັນຣັດເຊຍ ໃນທ້າຍປີ 2021 ຜ່ານມາ, ປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ກ່ຽວກັບການຊຸກຍູ້ ແລະ ສົ່ງເສີມການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ແລະ ຄູ່ຮ່ວມຍຸດທະສາດລະຫວ່າງ ສອງປະເທດ ລາວ-ຣັດເຊຍ ກໍຄື ສອງອົງການນິຕິບັນຍັດໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຍິ່ງໆຂຶ້ນ ໃນວັນທີ 21

ອ່ານຕໍ່ໜ້າ 2

## ກອງປະຊຸມປຶກສາຫາລືສາມກຳມາທິການ ການຕ່າງປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV)

(ສພຊ) ໃນລະຫວ່າງວັນທີ 17-21 ຕຸລາ 2022 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມປຶກສາຫາລື ລະຫວ່າງສາມກຳມາທິການການຕ່າງປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ເຊິ່ງຈັດຂຶ້ນ ທີ່ເມືອງ

ອ່ານຕໍ່ໜ້າ 3



## ສືບຕໍ່ຍົກສູງການເປັນເສນາທິການໃຫ້ ກອສຊ ແລະ ຄະນະ ສສຊ ປະຈຳເຂດເລືອກຕັ້ງ



ໜ້າ 3

## ຄະນະຜູ້ແທນ ກວທສ ສຳເລັດການຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ



(ສພຊ) ຕອບສະໜອງຕາມຄຳເຊື້ອເຊີນຂອງສະຫາຍ ຫງຽວນດັກ ວິງ ກຳມະການສູນກາງພັກ, ຄະນະປະຈຳ,ປະທານກຳມາທິການວັດທະນະທຳ-ສຶກສາ ແລະ ສະຫາຍ ຫງວຽນຖຸ່ຍ ແອ່ງ ກຳມະການສູນກາງພັກ, ປະທານກຳມາທິການສັງຄົມ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, ໃນລະຫວ່າງວັນທີ 12-16 ຕຸລາຜ່ານມາ, ສະຫາຍ ນາງ ທຸມມາລີ ວົງພະຈັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ; ຈຸດປະສົງເພື່ອເປັນການຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ-ສອງລັດ, ສອງສະພາແຫ່ງຊາດ ເວົ້າລວມ, ເວົ້າສະເພາະ ແມ່ນການຜັນຂະຫຍາຍບົດບັນທຶກການຮ່ວມມື ລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດ

ອ່ານຕໍ່ໜ້າ 2

## ການຈັດຕັ້ງປະຕິບັດນຳໃຊ້ປຶ້ມຄູ່ມື ໃນການຕິດຕາມ ກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ

(ສພຊ) ໃນວັນທີ 24-25 ຕຸລາ 2022 ທີ່ແຂວງສະຫວັນນະເຂດ ໄດ້ມີກອງປະຊຸມການຈັດຕັ້ງປະຕິບັດນຳໃຊ້ປຶ້ມຄູ່ມື ໃນການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ (ຂົງເຂດຍຸຕິທຳ 4 ສະບັບ) ໂດຍການເປັນປະທານຮ່ວມຂອງທ່ານ ສີສູນທອນ ສ.ພາບມີໄຊຍ໌ ຮອງປະ

ອ່ານຕໍ່ໜ້າ 3





ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

## ປະທານ...

ທິດສະວັດຜ່ານມານັ້ນ ພະສົງ-ສາມະເນນລາວ ກໍໄດ້ໄປສຶກສາຢູ່ສະຖາບັນດັ່ງກ່າວນີ້.

ພັກ-ລັດຖະບານ ສປປລາວ ຍາມໃດກໍໃຫ້ຄວາມສຳຄັນຕໍ່ວຽກງານສາສະໜາ ເຊິ່ງໄດ້ລະບຸແຈ້ງຢູ່ໃນລັດຖະທຳມະນູນລາວ: ພົນລະເມືອງລາວ ມີສິດເສລີພາບໃນການເຊື່ອຖື ຫລື ບໍ່ເຊື່ອຖືສາສະໜາທີ່ບໍ່ຂັດກັບກົດໝາຍ ເຄື່ອນໄຫວນຳເອົາສິ່ງທີ່ເປັນປະໂຫຍດຕໍ່ປະເທດຊາດບ້ານເມືອງ ແລະ ປະຕິບັດຕາມຫລັກສິນທຳທາງພຸດທະສາສະໜາຢ່າງເຄັ່ງຄັດ ແລະ ຫ້າມຈຳແນກແບ່ງແຍກຄວາມສາມັກຄີເຊິ່ງກັນແລະກັນ.



ສາສະໜາພຸດ ເປັນສາສະໜາທີ່ຕິດພັນກັບຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມ ຂອງຊາດລາວມາແຕ່ດຶກດຳບັນ ຫລື ນັບແຕ່ສັດຕະວັດທີ 14 ເປັນຕົ້ນມາ, ພະສົງ-ສາມະເນນ ເຄີຍມີມູນເຊື້ອຕິດພັນກັບຊາດ ຕິດພັນກັບປະຊາຊົນລາວບັນດາເຜົ່າ ເຊິ່ງມີພາລະໜ້າທີ່ໃນການນຳເອົາຫລັກສິນທຳ ຈະລິຍະທຳອັນດີງາມ ໄປເຜີຍແຜ່ເທດສະໜາສັ່ງສອນ, ສຶກສາອົບຮົມປະຊາຊົນລາວບັນດາເຜົ່າໃຫ້ຮູ້ຈັກບາບ ບຸນ ຄຸນ ໂທດ ຕ່າງໆ ເປັນເວລາດົນນານມາແລ້ວ.

ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນໄລຍະໃໝ່ນີ້, ພະສົງ-ສາມະເນນ ຍິ່ງມີບົດບາດສຳຄັນຫລາຍ ໃນການປະກອບສ່ວນເຕົ້າໂຮມ ຄວາມສາມັກຄີປະຊາຊົນບັນດາເຜົ່າ ການສຶກສາອົບຮົມສິນລະທຳ ໃຫ້ແກ່ລູກຫລານ ຂອງປະຊາຊົນບັນດາເຜົ່າ ແລະ ນອກຈາກນີ້, ພະສົງ-ສາມະເນນລາວ ຍັງໄດ້ປະກອບສ່ວນ ນຳເອົາແນວທາງຂອງພັກ ແລະ ລັດຖະບານລາວ ທີ່ວາງອອກແຕ່ລະໄລຍະ ໄປຜັນຂະຫຍາຍ ສອດຫ້ອຍກັບຫລັກສິນທຳທາງພຸດທະສາສະໜາ, ການເທດສະໜາສັ່ງສອນໃຫ້ປະຊາຊົນລາວ ໂດຍສະເພາະວາລະແຫ່ງຊາດກ່ຽວກັບບັນຫາຢາເສບຕິດ ເປັນຕົ້ນ.

ຂ້າພະເຈົ້າ ຍັງມີຄວາມຊົງຈຳໃນເວລາດຳລົງຕຳແໜ່ງ ເປັນປະທານຄະນະກຳມະການສູນກາງແນວລາວສ້າງຊາດ ໄດ້ປະກອບສ່ວນຊີ້ນຳ, ທັງເຂົ້າຮ່ວມ ແລະ ຊຸກຍູ້ສົ່ງເສີມ ວຽກງານສຳຄັນທາງພຸດທະສາສະໜາ ຈຳນວນໜຶ່ງ ເປັນຕົ້ນແມ່ນ: ປັບປຸງທຳມະນູນສົງລາວ, ປັບປຸງດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ ສາສະໜາ ຢູ່ ສປປລາວ, ພິທີສະເຫລີມສະຫລອງວັນວິສາຂະບູຊາລະດັບຊາດ, ກອງປະຊຸມ 3 ປະທານອົງການພຸດທະສາສະໜາ ລາວ-ຫວຽດນາມ ແລະ ກຳປູເຈຍ, ສະເຫລີມສະຫລອງວັນພຸດທະສາສະໜາສາກົນ, ການສະແດງສິລະປະວັນນະຄະດີຂອງບັນດາສາສະໜາຕ່າງໆ ຢູ່ ສປປລາວ ແລະ ການສົ່ງເສີມການຮ່ວມມືບັນດາປະເທດຊາວພຸດລຸ່ມແມ່ນ້ຳຂອງ ຫລື ທຳມະຍາດຕາ 5 ແຜ່ນດິນ ເປັນຕົ້ນ.




## ຄະນະມິດຕະພາບ...

ຕຸລາ 2022 ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ມີການຈັດກອງປະຊຸມພົບປະທາງໄກລະຫວ່າງປະທານຄະນະມິດຕະພາບ ລັດຖະສະພາລາວ-ຣັດຊຍ, ຣັດເຊຍ-ລາວ ເຊິ່ງຝ່າຍລາວນຳໂດຍທ່ານ ພທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຣັດເຊຍ ແລະ ຝ່າຍຣັດເຊຍ ນຳໂດຍທ່ານ ປາແວວ ທາຣາກາໂນບ (Pavel TARAKA-NOV) ສະມາຊິກສະພາສູງ, ປະທານຄະນະມິດຕະພາບລັດຖະສະພາ ຣັດເຊຍ-ລາວ ໂດຍມີຮອງປະທານຄະນະມິດຕະພາບ ລັດຖະສະພາລາວ-ຣັດເຊຍ, ຣັດເຊຍ-ລາວ, ເອກອັກຄະລັດຖະທູດ ແລະ ຄະນະນຳທີ່ກ່ຽວຂ້ອງທັງສອງຝ່າຍເຂົ້າຮ່ວມ.

ໃນການພົບປະຄັ້ງນີ້, ສອງຝ່າຍໄດ້ແຈ້ງໃຫ້ກັນຊາບກ່ຽວກັບສະພາບການພົ້ນເດັ່ນຂອງແຕ່ລະປະເທດ, ຕີລາຄາການພົວພັນຮ່ວມມື ລະຫວ່າງສອງລັດ ແລະ ປະຊາຊົນສອງຊາດ ລາວ-ຣັດເຊຍ, ຣັດເຊຍ-ລາວ ແລະ ລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ, ພ້ອມທັງໄດ້ມີການປຶກສາຫາລື ກ່ຽວກັບທິດທາງໃນການຮ່ວມມືດ້ານຕ່າງໆ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ແລະ ຄູ່ຮ່ວມຍຸດທະສາດ ລະຫວ່າງສອງປະເທດ ລາວ-ຣັດເຊຍ ກໍຄືສອງອົງການນິຕິບັນຍັດ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳຫລາຍຂຶ້ນ ເປັນຕົ້ນໃນຂະແໜງການຄ້າ-ການລົງທຶນ, ພະລັງງານ, ການສຶກສາ, ວັດທະນະທຳ-ສັງຄົມ ແລະ ບັນດາໂຄງການຮ່ວມມືຕ່າງໆທີ່ສອງຝ່າຍໄດ້ມີການລົງນາມຮ່ວມມືນຳກັນ; ຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ແຈ້ງສະພາບການໃນການຕ້ານ, ສະກັດກັ້ນ ແລະ ຮັບມືກັບການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ ສປປລາວ ໃນປັດຈຸບັນ ແລະ ໄດ້ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນຣັດເຊຍ ທີ່ໄດ້ໃຫ້ການຊ່ວຍເຫລືອທາງດ້ານອຸປະກອນ ແລະ ຢາ Sputnik ມາໃຫ້ປະຊາຊົນລາວ ໃນການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ ສປປລາວ ສາມາດຮັບມືໄດ້ດີພໍສົມຄວນ, ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ຕີລາຄາສູງຕໍ່ສາຍພົວພັນ ລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃນໄລຍະທີ່ຜ່ານມາ ແລະ ສະແດງຄວາມພ້ອມທີ່ຈະສືບຕໍ່ຮ່ວມມືກັນໃນຕໍ່ໜ້າ ໂດຍຈະສືບຕໍ່ປະຕິບັດຕາມຂໍ້ຕົກລົງບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາສູງຣັດເຊຍ ໃນໄລຍະຜ່ານມາ ເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອທີ່ດີງາມມາແຕ່ດົນນານ ແລະ ຄູ່ຮ່ວມຍຸດທະສາດ ລະຫວ່າງລາວ-ຣັດເຊຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງໆຂຶ້ນ; ພ້ອມນັ້ນ, ທ່ານຍັງໄດ້ສະເໜີທິດທາງການພົວພັນ ແລະ ການຮ່ວມມື ລະຫວ່າງສອງອົງການນິຕິບັນຍັດໃນຕໍ່ໜ້າ ດັ່ງນີ້: ສືບຕໍ່ປະຕິບັດຜົນການພົບປະທາງໄກລະຫວ່າງ ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ແລະ ທ່ານ ນາງ ວາເລັນຕີນາ ມັດວຽນໂກ ປະທານສະພາສູງ ສ.ຣັດເຊຍ ໃນເດືອນທັນວາ 2021 ຜ່ານມາ ໂດຍສະເພາະແມ່ນການແລກປ່ຽນການຢ້ຽມຢາມ ລະຫວ່າງ ຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ ແລະ ຄະນະມິດຕະພາບລັດຖະສະພາ ຢ່າງເປັນປົກກະຕິ ທີ່ຕິດພັນກັບການແລກປ່ຽນບົດຮຽນ ກ່ຽວກັບການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ; ສະເໜີສອງຝ່າຍຊຸກຍູ້ໃຫ້ມີການຈັດຕັ້ງປະຕິບັດບັນດາສັນຍາ ແລະ ສົນທິສັນຍາ ທີ່ສອງລັດຖະບານລາວ ແລະ ຣັດເຊຍ ໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ ເປັນຕົ້ນແມ່ນການຮ່ວມມືວຽກງານປ້ອງກັນຊາດ, ການຮ່ວມມືທາງດ້ານເສດຖະກິດ (ການຄ້າ-ການລົງທຶນ), ການສຶກສາ, ສາທາລະນະສຸກ, ການທ່ອງທ່ຽວ, ດ້ານພະລັງງານ ແລະ ອື່ນໆ ລວມທັງສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດບັນດາໂຄງການຕ່າງໆຂອງຣັດເຊຍ ທີ່ລົງທຶນຢູ່ ສປປລາວ ໃຫ້ສຳເລັດຕາມແຜນການທີ່ຕົກລົງກັນ ແລະ ສືບຕໍ່ຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ ເຊິ່ງໃນປີ 2024 ນີ້ ສະພາແຫ່ງຊາດລາວ ຈະໄດ້ເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45.

ທ່ານ ປາແວວ ທາຣາກາໂນບ ໄດ້ສະແດງຄວາມຊົມເຊີຍ ແລະ ຂອບໃຈທີ່ທ່ານຮອງປະທານສະພາແຫ່ງຊາດລາວ ໄດ້ເສຍສະຫລະເວລາອັນມີຄຸນຄ່າ ເປັນປະທານຮ່ວມກອງປະຊຸມໃນຄັ້ງນີ້ ພ້ອມທັງຊົມເຊີຍບັນດາຜົນສຳເລັດອັນຮອບດ້ານຂອງ ສປປລາວ ໃນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາ ກໍຄືປັດຈຸບັນ, ທັງໄດ້ຕີລາຄາສູງຕໍ່ສາຍພົວພັນຂອງສອງຝ່າຍ ໃນດ້ານຕ່າງໆ ແລະ ເຫັນດີຈະຮ່ວມກັບຝ່າຍລາວ ເພື່ອເສີມຂະຫຍາຍສາຍພົວພັນຮ່ວມມື ລະຫວ່າງອົງການນິຕິບັນຍັດຂອງສອງປະເທດໃນດ້ານຕ່າງໆ ໃຫ້ໄດ້ຮັບການພັດທະນາຍິ່ງຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ຣັດເຊຍ-ລາວ ກໍຄືຜົນປະໂຫຍດ ຂອງສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ໃນພາກພື້ນ ແລະ ໃນໂລກ.

(ສອນສັກ ວັນວິໄຊ)

## ຄະນະຜູ້ແທນ...

ນາມ ໃຫ້ເຂົ້າສູ່ລວງເລິກ.

ໃນການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້, ໄດ້ພົບປະສອງຝ່າຍຮ່ວມກັນ ລະຫວ່າງ ກຳມາທິການວັດທະນະທຳ-ສັງຄົມ (ກວທສ) ສະພາແຫ່ງຊາດ ແຫ່ງ ສປປລາວ ກັບກຳມາທິການວັດທະນະທຳ-ສຶກສາ ແລະ ກຳມາທິການສັງຄົມ ຂອງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຢູ່ທີ່ຫໍສະພາແຫ່ງຊາດ ສສ.ຫວຽດນາມ ເຊິ່ງການພົບປະໄດ້ມີການລາຍງານສະພາບການເຄື່ອນໄຫວໂດຍສັງເຂບຂອງແຕ່ລະຝ່າຍໃຫ້ກັນຮັບຊາບ, ແລກປ່ຽນບາງບົດຮຽນໃນຂົງເຂດວັດທະນະທຳ-ສັງຄົມ ເປັນຕົ້ນ: ການຕິດຕາມກວດກາປົກກະຕິ, ຫົວຂໍ້ສະເພາະ ແລະ ບັນຫາເຄັ່ງຮ້ອນທີ່ມີຜົນກະທົບຕໍ່ສັງຄົມ, ການຄົ້ນຄວ້າເພື່ອກຳນົດຫົວຂໍ້ກ່ຽວກັບການຕົກລົງບັນຫາສຳຄັນຂອງຊາດ ແລະ ກົນໄກປະສານງານກັບລັດຖະບານ, ບັນດາກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ, ການຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ, ຄຳສະເໜີຂອງປະຊາຊົນ; ການບຳລຸງສ້າງພະນັກງານໃຫ້ເປັນມືອາຊີບ, ການຕິດຕາມກວດກາຂອງສະພາແຫ່ງຊາດກ່ຽວກັບການສ້າງ, ຄຸ້ມຄອງ ແລະ ນຳໃຊ້ກອງທຶນປະກັນສັງຄົມ, ກອງທຶນປະກັນສຸຂະພາບ ແລະ ການແກ້ໄຂບັນຫາການວ່າງງານ; ການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ເພື່ອໃຫ້ກົດໝາຍມີຄວາມສັກສິດ; ພ້ອມກັນນັ້ນ, ທັງສອງຝ່າຍຍັງໄດ້ປຶກສາຫາລືກ່ຽວກັບທິດທາງ ແລະ ແຜນການຮ່ວມມືກັນໃນຕໍ່ໜ້າ.

ໃນຕອນບ່າຍຂອງວັນທີ 13 ຕຸລາ 2022 ຄະນະຜູ້ແທນກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂ່ຳນັບສະຫາຍ ເຈີນ ແທງ ເໝີນ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຜູ້ປະຈຳການຢູ່ທີ່ຫໍປະຊຸມສະພາແຫ່ງຊາດ ສສ.ຫວຽດນາມ ເຊິ່ງທ່ານໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນໃນຄັ້ງນີ້ ທີ່ເປັນການສືບຕໍ່ມູນເຊື້ອອັນດີງາມ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ, ສອງສະພາແຫ່ງຊາດ ເວົ້າລວມ, ເວົ້າສະເພາະແມ່ນເປັນການເສີມຂະຫຍາຍການພົວພັນ ແລະ ຮ່ວມມື ລະຫວ່າງກຳມາທິການວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ສປປລາວ ກັບກຳມາທິການວັດທະນະທຳ-ສຶກສາ ແລະ ກຳມາທິການສັງຄົມ ຂອງສະພາແຫ່ງຊາດ ສສ.ຫວຽດນາມ ທີ່ມີມາແຕ່ດົນນານແລ້ວນັ້ນໃຫ້ມີຄວາມໜັກແໜ້ນ,ຈະເລີນງອກງາມ, ມີໝາກມີຜົນຕົວຈິງ ແລະ ເປັນການຜັນຂະຫຍາຍຜົນສຳເລັດການຢ້ຽມຢາມ ສປປລາວ ຢ່າງເປັນທາງການຂອງສະຫາຍ ເວືອງ ດິງ ເຫວ້ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃນເດືອນພຶດສະພາ 2022 ທີ່ຜ່ານມາໃຫ້ເຂົ້າສູ່ລວງເລິກ.

ໃນວັນທີ 14 ຕຸລາ 2022, ຄະນະຜູ້ແທນໄດ້ພົບປະເຮັດວຽກກັບອົງການປະກັນສັງຄົມ ຂອງ ສສ. ຫວຽດນາມ ແລະ ເດີນທາງໄປເຄື່ອນໄຫວຢູ່ແຂວງບັກນິ່ງ ເພື່ອແລກປ່ຽນບົດຮຽນ ກ່ຽວກັບການສ້າງ, ຄຸ້ມຄອງ ແລະ ນຳໃຊ້ ກອງທຶນປະກັນສັງຄົມ, ກອງທຶນປະກັນສຸຂະພາບ ແລະ ການແກ້ໄຂບັນຫາການວ່າງງານ ເຊິ່ງການເຄື່ອນໄຫວຢູ່ແຂວງບັກນິ່ງ ຄະນະຜູ້ແທນຂອງກຳມາທິການ ໄດ້ເຮັດວຽກຮ່ວມກັບຄະນະສະມາຊິກສະພາແຂວງບັກນິ່ງ ແລະ ໃນວັນທີ 15 ຕຸລາ 2022, ຄະນະຜູ້ແທນໄດ້ເດີນທາງໄປຢ້ຽມຢາມ ແລະ ພົບປະກັບ ຄະນະອຳນວຍການ, ຄູ ແລະ ອາຈານ ເພື່ອຮັບຟັງການລາຍງານສະພາບການຮຽນ-ການສອນ ແລະ ໄດ້ໂອ້ລົມຕໍ່ນັກຮຽນລາວ ທີ່ກຳລັງສຶກສາຢູ່ໂຮງຮຽນມິດຕະພາບ T78 ແລະ ໃນໂອກາດນີ້, ສະຫາຍ ນາງ ທຸມມາລີ ວົງພະຈັນ ໄດ້ໂອ້ລົມຕໍ່ນັກຮຽນລາວ ໃຫ້ເອົາໃຈໃສ່ຕັ້ງໃຈຮ່ຳຮຽນ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດກົດໝາຍ, ກົດລະບຽບຂອງໂຮງຮຽນ, ເປັນເຈົ້າການຕ້ານປະກົດການຫຍໍ້ທໍ້ຕ່າງໆ, ເຝິກຝົນຫລໍ່ຫລອມຕົນເອງໃຫ້ເປັນນັກຮຽນດີ, ນັກຮຽນເກັ່ງ ເພື່ອໃຫ້ເປັນຜູ້ສືບທອດທີ່ດີ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເພີ່ມພູນຄູນສ້າງມູນເຊື້ອອັນດີງາມ ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ພັກ-ລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ໃຫ້ຂຽວສົດງົດງາມ ແລະ ໝັ້ນຄົງຂະໜົງແກ່ນຕະຫລອດການລະນານ.






## ກອງປະຊຸມ...

ຊາປາ, ແຂວງລາວກ່າຍ, ສສ.ຫວຽດນາມ ມີຄະນະຜູ້ແທນ ທີ່ເປັນສະມາຊິກສະພາແຫ່ງຊາດ ຈາກກຳມາທິການການຕ່າງປະເທດ ແລະ ກຳມາທິການທີ່ກ່ຽວຂ້ອງ ຂອງທັງສາມສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ ເຂົ້າຮ່ວມກວ່າ 30 ທ່ານ.

ກອງປະຊຸມປຶກສາຫາລືລະຫວ່າງສາມກຳມາທິການການຕ່າງປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ແມ່ນກອງປະຊຸມສະເພາະກິດທີ່ມີຄວາມສຳຄັນເປັນຢ່າງຍິ່ງ ໂດຍມີຈຸດປະສົງ ເພື່ອລະດົມແນວຄິດ, ປຶກສາຫາລື ແລະ ປັບປຸງຮ່າງລະບຽບດຳເນີນງານຂອງກອງປະຊຸມສຸດຍອດສະພາແຫ່ງຊາດກຳປູເຈຍ, ລາວ ແລະ ຫວຽດນາມ ເຊິ່ງສະພາແຫ່ງຊາດລາວເປັນຜູ້ລິເລີ່ມໃນການຮ່າງເນື້ອໃນທຳອິດ. ຮ່າງລະບຽບດຳເນີນງານດັ່ງກ່າວຈະເປັນເອກະສານນຳໃຊ້ໃນການອ້າງອີງການຍົກລະດັບການຮ່ວມມືໃນກອບກອງປະຊຸມຮ່ວມລະຫວ່າງສາມກຳມາທິການ (ກຳມາທິການການຕ່າງປະເທດ, ກຳມາທິການແຜນການ, ການເງິນ ແລະ ກວດສອບ ແລະ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ) ຂອງສະພາແຫ່ງຊາດກຳປູເຈຍ, ລາວ ແລະ ຫວຽດນາມ ໃຫ້ກາຍເປັນກອງປະຊຸມຂັ້ນປະທານສະພາແຫ່ງຊາດຂອງທັງສາມປະເທດ. ໃນກອງປະຊຸມປຶກສາຫາລື, ທ່ານປະທານກຳມາທິການການຕ່າງປະເທດສະພາແຫ່ງຊາດລາວ ໄດ້ຂຶ້ນກ່າວປາໄສ ພ້ອມທັງໄດ້ນຳສະເໜີຜ່ານເນື້ອໃນຂອງຮ່າງລະບຽບດຳເນີນງານກອງປະຊຸມ ແລະ ໄດ້ເນັ້ນໜັກໃຫ້ກອງປະຊຸມທີ່ນຳພາໂດຍກອງປະຊຸມປະຕິບັດງານ (working group of the meeting) ໄດ້ຮ່ວມກັນປຶກສາຫາລືລາຍລະອຽດຂອງຮ່າງລະບຽບດຳເນີນງານ ໂດຍໃຫ້ແນໃສ່ການຍົກສູງບົດບາດຂອງອົງການນິຕິບັນຍັດໃນການເພີ່ມທະວີ ແລະ ຮັດແໜ້ນສາຍພົວພັນມິດຕະພາບ ທີ່ມີມູນເຊື້ອອັນດີງາມ, ຄວາມສາມັກຄີແບບສະໜິດແໜ້ນ ແລະ ການຮ່ວມມືທີ່ດີລະຫວ່າງສາມປະເທດ ເພື່ອຮັບປະກັນການພັດທະນາເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນໃນເຂດສາມຫລ່ຽມພັດທະນາ CLV.

ຄະນະຜູ້ແທນສະພາແຫ່ງຊາດລາວ ແລະ ກຳປູເຈຍ ຍັງໄດ້ມີໂອກາດລົງໄປຢ້ຽມຢາມດ່ານສາກົນ Kim Thanh ຫວຽດນາມ-ຈີນ ຢູ່ແຂວງລາວກ່າຍ, ສສ.ຫວຽດນາມ ເຊິ່ງເປັນດ່ານສາກົນທາງບົກທີ່ສຳຄັນຂອງຫວຽດນາມ; ພ້ອມນັ້ນ, ກໍໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບການຂົນສົ່ງສິນຄ້າ, ລະບົບໂຄງຮ່າງການຈັດຕັ້ງຂອງດ່ານສາກົນ ແລະ ການບໍລິຫານ-ຈັດການສິນຄ້າຜ່ານລະບົບອີເລັກໂຕນິກ.

ໃນໂອກາດດຽວກັນນີ້, ປະທານກຳມາທິການການຕ່າງປະເທດຂອງທັງສາມສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ ກໍໄດ້ຮັບກຽດນຳພາຄະນະຜູ້ແທນໄດ້ເຂົ້າຢ້ຽມຂໍ່ານັບພະນະທ່ານ ເວືອງ ດິງ ເຫວ້ ປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ເພື່ອລາຍງານຜົນສຳເລັດກອງປະຊຸມດັ່ງກ່າວ; ພ້ອມນັ້ນ, ທັງສາມປະທານກຳມາທິການການຕ່າງປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ ກໍໄດ້ລົງລາຍເຊັນໃສ່ບົດບັນທຶກກອງປະຊຸມຮ່ວມກັນ ເພື່ອເປັນການຢັ້ງຢືນຄືນຜົນສຳເລັດໃນການຮ່າງລະບຽບດຳເນີນງານ ທັງເປັນການຊຸກຍູ້ຄວາມພ້ອມໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມສຸດຍອດສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ ທີ່ສະພາແຫ່ງຊາດລາວຈະເປັນເຈົ້າພາບ ໃນປີ 2023 ທີ່ຈະມາເຖິງນີ້.

ສຳລັບຜົນຂອງກອງປະຊຸມດັ່ງກ່າວ, ແມ່ນຈະໄດ້ນຳໄປສືບຕໍ່ປຶກສາຫາລື ເພື່ອໃຫ້ປະທານສະພາແຫ່ງຊາດຂອງທັງສາມປະເທດຮັບຮອງເອົາທີ່ກອງປະຊຸມລະຫວ່າງສາມປະທານສະພາແຫ່ງຊາດ ກຳປູເຈຍ, ລາວ ແລະ ຫວຽດນາມ ໃນໄລຍະການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ທີ່ພະນົມເປັນ ຣາຊະອານາຈັກກຳປູເຈຍ ອີກດ້ວຍ.

## ສືບຕໍ່...

(ສພຊ) ເພື່ອເປັນການສືບຕໍ່ການຍົກລະດັບຂີດຄວາມສາມາດການເປັນເສນາທິການທາງດ້ານເນື້ອໃນໃຫ້ແກ່ພະນັກງານ-ລັດຖະກອນ ພາຍໃນກົມທີ່ເປັນເສນາທິການຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ແລະ ພະນັກງານຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ; ເພື່ອເພີ່ມທະວີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ແລະ ຖືກຕ້ອງ ຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ກວສຊ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ການພົວພັນປະສານງານກັບສະພາປະຊາຊົນຂັ້ນແຂວງ ລວມທັງການພົບປະກັບປະຊາຊົນຂອງສະມາຊິກສະພາ; ເພື່ອເຜີຍແຜ່ເຊື່ອມຊຶມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ແລະ ກົມພັດທະນາວຽກງານສະພາ; ເພີ່ມທະວີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ແລະ ຖືກຕ້ອງ ຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ກວສຊ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ການພົວພັນປະສານງານກັບສະພາປະຊາຊົນຂັ້ນແຂວງ ລວມທັງການພົບປະກັບປະຊາຊົນ ຂອງສະມາຊິກສະພາ; ເຜີຍແຜ່ເຊື່ອມຊຶມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ແລະ ກົມພັດທະນາວຽກງານສະພາ ແລະ ເພື່ອສ້າງຄວາມຮັບຮູ້ຢ່າງກວ້າງຂວາງ ຕໍ່ວຽກງານຄຸ້ມຄອງພະນັກງານ-ລັດຖະກອນ ແລະ ການສ້າງຕັ້ງກົງຈັກການຈັດຕັ້ງການຄຸ້ມຄອງບໍລິຫານລັດຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງການພົວພັນປະສານງານ ລະຫວ່າງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງຂັ້ນແຂວງ ໃຫ້ມີຄວາມສະດວກຕໍ່ການປະຕິບັດໜ້າທີ່ວຽກງານມີຄວາມເປັນເອກະພາບແລະຍົກລະດັບວຽກໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ໃນລະຫວ່າງວັນທີ 24-25 ຕຸລາ 2022 ທີ່ສະໂມສອນເມືອງຄົງເຊໂດນ ແຂວງສາລະວັນ, ໄດ້ມີກອງປະຊຸມເຝິກອົບຮົມບົດບາດການເປັນເສນາທິການໃຫ້ແກ່ ກວສຊ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ມີບັນດາທ່ານຮອງປະທານກຳມາທິການ, ເລຂາ-ຮອງເລຂາທິການສະພາປະຊາຊົນແຂວງສາລະວັນ, ເຊກອງ, ຈຳປາສັກ, ອັດຕະປື, ຄຳມ່ວນ, ໄຊສົມບູນ, ບໍລິຄຳໄຊ, ສະຫວັນນະເຂດ ແລະ ນະຄອນຫລວງວຽງຈັນ; ຄະນະກົມ, ຄະນະພະແນກ, ບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງຊ່ວຍວຽກຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ ແລະ ວິທະຍາກອນຖືກເຊີນເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການສະເໜີກ່ຽວກັບການເພີ່ມທະວີປະສານງານລະຫວ່າງ ກວສຊ, ຄະນະເລຂາທິການສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເພື່ອຍົກສູງຄຸນນະພາບໃນການປະຕິບັດວຽກງານ ຈາກຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ພາລະບົດບາດຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ໂດຍຕິດພັນການຮ່າງບົດສະຫລຸບ ແລະ ແຜນການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ການສະຫລຸບ-ລາຍງານການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ຈາກຫົວໜ້າກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ; ພາລະບົດບາດຂອງກົມພັດທະນາວຽກງານສະພາ ໂດຍສະເພາະວຽກງານການພົວພັນປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ຈາກຫົວໜ້າກົມພັດທະນາວຽກງານສະພາ ແລະ ການສ້າງຄວາມເຂົ້າໃຈເລິກເຊິ່ງຕໍ່ລະບົບການປົກຄອງຂອງ ສປປລາວ ໂດຍລົງເລິກໂຄງປະກອບກົງຈັກການຈັດຕັ້ງຢູ່ຂັ້ນທ້ອງຖິ່ນ ແລະ ການຄຸ້ມຄອງພະນັກງານ-ລັດຖະກອນ ຕາມພາລະບົດບາດຂອງກະຊວງພາຍໃນ ຈາກທ່ານຫົວໜ້າກົມພັດທະນາການບໍລິຫານລັດກະຊວງພາຍໃນ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ບັນດາຫົວຂໍ້ທີ່ນຳມາສະເໜີຕາມຄຳເຫັນເຈາະຈົ້ມຂອງທ່ານປະທານກອງປະຊຸມ ເພື່ອແລກປ່ຽນຄຳຄິດເຫັນເຊິ່ງກັນແລະກັນກັບບັນດານັກວິທະຍາກອນ.

ໃນໂອກາດເປີດກອງປະຊຸມ, ທ່ານ ສຸບັນ ສະວະບຸດ ໄດ້ກ່າວວ່າ: ເພື່ອເປັນການຍົກສູງບົດບາດການເປັນເສນາທິການ ຂອງພະນັກງານ-ລັດຖະກອນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ທັງເປັນການເພີ່ມທະວີການພົວພັນປະສານງານກັນ ລະຫວ່າງ ກວສຊ, ຄະນະເລຂາທິການສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໃຫ້ມີຄວາມໂລ່ງລ່ຽນຂຶ້ນຕື່ມ; ສະນັ້ນ, ຈະໄດ້ສຸມໃສ່ຄົ້ນຄວ້າ, ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ເນື້ອໃນຕ່າງໆທີ່ໄດ້ນຳມາສະເໜີໃນຄັ້ງນີ້ ເຊິ່ງກອງປະຊຸມໄດ້ດຳເນີນເປັນເວລາ 2 ວັນ ແຕ່ມີຫລາຍບັນຫາທີ່ຈະໄດ້ຄົ້ນຄວ້າ, ສົນທະນາແລກປ່ຽນຄຳຄິດເຫັນຮ່ວມກັນເພື່ອຮັບປະກັນເຮັດໃຫ້ກອງປະຊຸມດຳເນີນໄປດ້ວຍຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມ ຈົ່ງຍົກສູງຄວາມຮັບຜິດຊອບ ເປັນເຈົ້າການໃນການຄົ້ນຄວ້າ, ສົນທະນາແລກປ່ຽນຄຳຄິດຄຳເຫັນຢ່າງສ້າງສັນ ແລະ ມີຈຸດສຸມ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກອົງການເຮວວີຕັດ (HELVETAS) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ສອນສັກ ວັນວິໄຊ)



## ການຈັດຕັ້ງ...

ທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ແລະ ທ່ານ ນາງ ຫຼີງທອງ ແສງຕາວັນ ຮອງເຈົ້າແຂວງໆສະຫວັນນະເຂດ ເຂົ້າຮ່ວມມີຮອງປະທານກຳມາທິການ; ຮອງປະທານສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງການຊາດ-ປ້ອງກັນຄວາມສະຫງົບສະພາປະຊາຊົນແຂວງ; ຫົວໜ້າສານປະຊາຊົນພາກໃຕ້, ຫົວໜ້າອົງການໄອຍະການປະຊາຊົນ ຈາກ 3 ແຂວງ ຄື: ຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ; ຮອງປະທານກວດກາລັດແຂວງ, ພະນັກງານຈາກພະແນກຍຸຕິທຳແຂວງ, ຫ້ອງການສະພາທະນາຍຄວາມ ປະຈຳແຂວງ, ອົງການກວດກາລັດແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງສະຫວັນນະເຂດ; ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງສະເໜີບົດລາຍງານຂອງສານປະຊາຊົນພາກ, ແຂວງ ກ່ຽວກັບຜົນການປະເມີນກົດໝາຍ ວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈາກສານປະຊາຊົນພາກໃຕ້ ແລະ ສານປະຊາຊົນແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ; ສະເໜີບົດລາຍງານຂອງອົງການໄອຍະການປະຊາຊົນພາກ, ແຂວງ ກ່ຽວກັບຜົນການປະເມີນກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ຈາກອົງການໄອຍະການປະຊາຊົນພາກໃຕ້ ແລະ ອົງການໄອຍະການປະຊາຊົນແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ; ຈາກນັ້ນ, ປະທານກອງປະຊຸມມີຄຳຖາມເຈາະຈົ້ມ ເພື່ອໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ບັນດາບົດລາຍງານດັ່ງກ່າວ; ພ້ອມນັ້ນ, ກອງປະຊຸມໄດ້ຮັບຟັງຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງຕື່ມອີກ.

ຈຸດປະສົງກອງປະຊຸມ ກໍເພື່ອທົດລອງນຳໃຊ້ຮ່າງຄູ່ມື ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ; ຕິດຕາມກວດກາ ແລະ ຊຸກຍູ້ ການປະເມີນການຈັດຕັ້ງປະຕິບັດ ກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍ ສານປະຊາຊົນ, ກົດໝາຍວ່າດ້ວຍ ອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ; ລົງເກັບກຳຂໍ້ມູນ, ຮັບຟັງຄຳຄິດຄຳເຫັນຂອງການນຳທ້ອງຖິ່ນ ແລະ ຄຳເຫັນຂອງປະຊາຊົນ ຕໍ່ບັນຫາທີ່ພົ້ນເດັ່ນ ໃນຂົງເຂດຍຸຕິທຳ ໂດຍສະເພາະບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ສະຫລຸບຕີລາຄາການຈັດຕັ້ງປະຕິບັດ 4 ກົດໝາຍ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາຮັບຮອງ ແລະ ສະຫລຸບຖອດຖອນບົດຮຽນ ໃຫ້ແກ່ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຕ່າງໆໃນຕໍ່ໜ້າ.

ໂອກາດນີ້, ທ່ານ ສີສູນທອນ ສ.ພາບມີໄຊຍ໌ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ຄະນະປະຈຳສະພາແຫ່ງຊາດ ໄດ້ຮ່າງປຶ້ມຄູ່ມືໃນການຕິດຕາມກວດກາການຈັດຕັ້ງການປະເມີນກົດໝາຍສຳເລັດໂດຍພື້ນຖານ ເພື່ອເປັນການທົດລອງການນຳໃຊ້ຄູ່ມືດັ່ງກ່າວ ເພື່ອເປັນການຕິດຕາມກວດກາການປະເມີນກົດໝາຍໃນຂົງເຂດຍຸຕິທຳນັ້ນ. ກອງປະຊຸມຄັ້ງນີ້ ຈຶ່ງໄດ້ດຳເນີນຂຶ້ນເພື່ອຮັບຟັງການລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ ເພື່ອຮັບປະກັນເຮັດໃຫ້ການທົດລອງນຳໃຊ້ປຶ້ມຄູ່ມື ການລາຍງານ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ກັບການປະເມີນການຈັດຕັ້ງປະຕິບັດກົດໝາຍໄດ້ຮັບຜົນດີ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງມາຍັງບັນດາທ່ານຜູ້ແທນກອງປະຊຸມຈົ່ງພ້ອມກັນສຸ່ມໃສ່ຄົ້ນຄວ້າ ແລະ ແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ດ້ວຍຄວາມຮັບຜິດຊອບ ແລະ ຍົກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຜ່ານມາ ແນໃສ່ເຮັດໃຫ້ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສັກສິດປະກອບສ່ວນເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ໃຫ້ດີຂຶ້ນເປັນກ້າວໆ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກມູນນິທິເວສມິນສະເຕີ ເພື່ອປະຊາທິປະໄຕ (WFD) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ກຸກກິກ ບຸດດາໄຊ)



## ປະທານ ສພຂ ຢ້ຽມຢາມ ແລະ ເຜີຍແຜ່ເອກະສານຍຸຕິທຳ ແລະ ປກຊ-ປກສ



(ສພຊ) ໃນຕອນເຊົ້າຂອງວັນທີ 18 ຕຸລາ 2022 ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຜີຍແຜ່ມະຕິວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຢູ່ຫ້ອງປະຊຸມເຮືອນຮັບແຂກກອງບັນຊາການທະຫານແຂວງ ໂດຍການຕ້ອນຮັບຂອງທ່ານ ພົວ. ສີທະວີໄຊ ຫົວໜ້າການເມືອງກອງບັນຊາການທະຫານແຂວງ ພ້ອມດ້ວຍຄະນະ ຈາກ 5 ຫ້ອງການກອງບັນຊາການທະຫານແຂວງ.

ໃນພິທີ, ປະທານສະພາປະຊາຊົນແຂວງຍັງໄດ້ສະແດງຄວາມຢ້ຽມຢາມຖາມຂ່າວ ເຖິງການນຳ ແລະ ພະນັກງານນັກຮົບທີ່ພວມປະຕິບັດໜ້າທີ່ຢູ່ເຂດຫ່າງໄກສອກຫລີກ ພ້ອມທັງອວຍພອນໄຊອັນປະເສີດຕໍ່ຄະນະການນຳກອງບັນຊາການທະຫານແຂວງ ທີ່ປະສົບຜົນສຳເລັດວຽກງານທີ່ຂັ້ນເທິງມອບໝາຍໃຫ້ທຸກປະການ.

ໃນໂອກາດນີ້, ທ່ານ ທອງໃສ ອິນທິແສງ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຂັ້ນແຂວງ ແລະ ທ່ານ ພັທ. ຄູນສະໄໝ ລິນສັນຍາ ຄະນະພັກ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ມະຕິເລກທີ 129/ ຄປຈ.ສພຂ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ປະກອບມີປົດບັນຍັດ ແລະ ຂໍ້ຕົກລົງຮ່ວມເລກທີ 01/ ກປຊສ-ຄ.ກປທ ວ່າດ້ວຍການປະສານງານ ລະຫ່ວາງກຳມາທິການ ປກຊ-ປກສ ສະພາແຫ່ງຊາດ ຊຸດທີ IX ແລະ ຄະນະປະສານງານຂອງກະຊວງປ້ອງກັນປະເທດ ປະກອບມີ 7 ບົດບັນຍັດ. ຈາກນັ້ນ, ໃນກອງປະຊຸມກໍໄດ້ມີການສະເໜີປະກອບຄຳຄິດຄຳເຫັນຕໍ່ເນື້ອໃນເອກະສານດັ່ງກ່າວຢ່າງກົງໄປກົງມາເພື່ອໃຫ້ອຸດົມສົມບູນຂຶ້ນຕື່ມ.

ໃນຕອນທ້າຍ, ປະທານສະພາປະຊາຊົນແຂວງສະຫັວນເຂດ ໄດ້ໂອ້ລົມ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາທ່ານທີ່ໄດ້ສະເໜີຂໍ້ສະດວກຂໍ້ຄົງຂ້າງໃນການປະຕິບັດວຽກງານຕ່າງໄລຍະຜ່ານມາ ທັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ເປັນເຈົ້າການຮ່ວມມືກັບທຸກພາກສ່ວນອີງຈັດຕັ້ງພັກ-ລັດ, ຕ້ານກົນອຸບາຍ ແລະ ເລ່ຫຼ່ຽມຂອງສັດຕູໃນໄລຍະໃໝ່ທີ່ເປັນການໂຄສະນາທາງເອເລັກໂຕຣນິກ, ບັນຫາຕ່າງໆທີ່ພວກເຂົາກຳລັງສ້າງຂຶ້ນຕໍ່ຕ້ານແນວທາງການນຳພາຂອງພັກ-ລັດໃນປັດຈຸບັນນີ້ ຕ້ອງພ້ອມກັນແກ້ໄຂປາກົດການດັ່ງກ່າວ ໃຫ້ໝົດໄປເປັນກ້າວໆ.

## ກອງປະຊຸມປະເມີນພະນັກງານ-ລັດຖະກອນ ແລະ ປະເມີນການແຂ່ງຂັນ-ຍ້ອງຍໍ ປະຈຳປີ 2022



(ສພຊ) ໃນວັນທີ 13 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມປະເມີນພະນັກງານ-ລັດຖະກອນ ແລະ ປະເມີນການແຂ່ງຂັນ-ຍໍຍ້ອງ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ວຽງໄຊ ສີວິໄລ ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານສະພາປະຊາຊົນແຂວງເຂົ້າຮ່ວມ.

ການດຳເນີນກອງປະຊຸມໃນຄັ້ງນີ້, ເພື່ອເປັນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານສະພາປະຊາຊົນແຂວງ ໃນການປະເມີນຄັ້ງນີ້ໄດ້ປະເມີນການແຂ່ງຂັນ-ຍ້ອງຍໍ ປະຈຳປີ 2022 ຕາມ 6 ຂໍ້ແຂ່ງຂອງສະພາປະຊາຊົນແຂວງຄື: ໜັກແໜ້ນທາງດ້ານວຽກງານການເມືອງແນວຄິດ ແລະ ດ້ານຄຸນສົມບັດສົນທຳປະຕິບັດ, ມີແບບແຜນວິທີເຮັດວຽກທີ່ດີ, ມີຫົວຄິດປະດິດສ້າງໃນໜ້າທີ່ວຽກງານ, ມີຄວາມກະຕືລືລົ້ນ, ສຸມຈິດໃຈຕໍ່ໜ້າທີ່ວຽກງານ, ມີຄວາມໂປ່ງໃສ, ຍຸຕິທຳ, ຮັບຜິດຊອບລ້ອນໜ້າທີ່ຕາມການມອບໝາຍ, ມີຄວາມສາມັກຄີ-ມີຄວາມເປັນເອກະພາບໃນວຽກງານຕ່າງໆຕາມມະຕິຂອງພັກ, ອີງການຈັດຕັ້ງມະຫາຊົນ ແລະ ສະພາປະຊາຊົນແຂວງ, ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງໃນການຊອກຮູ້ຮໍ່າຮຽນໃນດ້ານຕ່າງໆ ເພື່ອຍົກສູງຄວາມຮູ້, ຄວາມສາມາດຂອງຕົນຢ່າງບໍ່ຢຸດຢັ້ງ ແລະ ເຂົ້າຮ່ວມຂະບວນການຕ່າງໆຢ່າງເຂັ້ມແຂງ, ຝຶດຟື່ນ, ຊື່ສັດບໍລິສຸດ ແລະ ຈິງໃຈຮັບເອົາການຕຳນິສິ່ງຂ່າວຈາກການຈັດຕັ້ງ ແລະ ເພື່ອຮ່ວມງານ. ໃນໂອກາດດັ່ງກ່າວ ທ່ານ ວຽງໄຊ ສີວິໄລ ໄດ້ມີຄຳເຫັນໂອ້ລົມຕໍ່ພະນັກງານສະພາປະຊາຊົນແຂວງ ຈົ່ງສືບຕໍ່ປະຕິບັດໜ້າທີ່ວຽກງານຂອງສະພາປະຊາຊາຊົນແຂວງໃຫ້ມີຜົນສຳເລັດດີຂຶ້ນ, ຮັກສາຄວາມສາມັກຄີພາຍໃນໃຫ້ດີຂຶ້ນກວ່າເກົ່າ ແລະ ການໃຫ້ຄະແນນໃນການປະເມີນບໍ່ໃຫ້ມີແນວຄິດອະຄະຕິຕໍ່ຜູ້ຖືກປະເມີນ, ການປະເມີນຕ້ອງມີຄວາມໂປ່ງໃສສາມາດກວດສອບໄດ້.

(ນາງ ສຸກສະຫວັນ ອິນທະແສງ)

## ຕິດຕາມກວດກາວຽກງານ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ



(ສພຊ) ເພື່ອຮັບປະກັນໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສາມາດຕິດຕາມກວດກາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ແກ້ໄຂບັນຫາຢາເສບຕິດ ໃຫ້ບັນລຸຕາມຄາດໝາຍສູ້ຊົນ, ແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ; ໃນລະຫວ່າງວັນທີ 17-21 ຕຸລາ 2022 ສະພາປະຊາຊົນແຂວງໄຊສົມບູນ ນຳໂດຍທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນພ້ອມດ້ວຍພະນັກງານສະພາວິຊາການຕິດຕາມ ຢູ່ເມືອງຮົ່ມ ແລະ ເມືອງລ້ອງແຈ້ງ.

ໃນການເຄື່ອນໄຫວຄັ້ງນີ້, ກໍເພື່ອຕິດຕາມກວດກາໂຄງການການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ໂດຍການນຳໃຊ້ກາລະໂອກາດ ແລະ ທ່າແຮງບົ່ມຊ້ອນທີ່ໄດ້ປຽບໃນເງື່ອນໄຂເຊື່ອມໂຍງ ແລະ ເຊື່ອມຈອດຕາມແລວທາງເສດຖະກິດກັບພາກພື້ນ ແລະ ສາກົນ ເພື່ອສ້າງຖານລາຍຮັບໃຫ້ໄດ້ໄວ ແລະ ສ້າງພື້ນຖານເສດຖະກິດແຫ່ງຊາດໃຫ້ເຂັ້ມແຂງ ແລະ ຍືນຍົງ; ເພື່ອເສີມຂະຫຍາຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນແຂວງໄຊສົມບູນ ໃນການຊຸກຍູ້ຕິດຕາມກວດກາອົງການບໍລິຫານລັດ ເພື່ອຊອກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ ແລະ ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງໃນການປະຕິບັດໜ້າທີ່ດັ່ງກ່າວ ພ້ອມທັງເສີມຂະຫຍາຍດ້ານດີ ແລະ ແກ້ໄຂຂໍ້ຄົງຄ້າງ ສ້າງໃຫ້ອຳນາດລັດມີຄວາມເຂັ້ມແຂງຂຶ້ນເປັນກ້າວໆ.

ໂອກາດດັ່ງກ່າວ, ຍັງເປັນການຜັນຂະຫຍາຍມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ເພື່ອເປັນບ່ອນອີງໃຫ້ແກ່ບັນດາເປົ້າໝາຍທີ່ຖືກຕິດຕາມກວດກາໄດ້ຮັບການຊຸກຍູ້ໃນການຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ, ມີຄຸນນະພາບ ແລະ ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບຕ່າງໆ ທີ່ກ່ຽວຂ້ອງ ທັງເປັນຂໍ້ມູນພື້ນຖານໃຫ້ຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໃນການເກັບກຳຂໍ້ມູນ, ຊອກຫາວິທີແກ້ໄຂບາງດ້ານທີ່ເຫັນວ່າ ບໍ່ປະຕິບັດຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ກຳນົດໄວ້, ລາຍງານໃຫ້ສະພາແຫ່ງຊາດ ເພື່ອມີທິດຊີ້ນຳບາງບັນຫາທີ່ຍັງມີຂໍ້ຄົງຄ້າງ ແລະ ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍສະເພາະການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຢູ່ພາຍໃນແຂວງໄຊສົມບູນ.

ໃນການເຄື່ອນໄຫວ, ໄດ້ຮັບຟັງບົດລາຍງານຫຍໍ້ກ່ຽວກັບບັນຫາທີ່ເກີດຂຶ້ນຢູ່ພາຍໃນ 2 ເມືອງດັ່ງກ່າວ ທີ່ກ່ຽວຂ້ອງກັບຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດເສດຖະກິດ-ສັງຄົມ, ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເຊິ່ງໄດ້ລາຍງານໃຫ້ຊາບວ່າ ຍັງບັນຫາໃດທີ່ຍັງແກ້ໄຂບໍ່ໄດ້ ແລະ ບັນຫາໄດ້ທີ່ແກ້ໄຂໄດ້ແລ້ວ.

(ແສງຕາວັນ ລັດຕະວົງ)

## ຕີລາຄາການຕິດຕາມກວດກາ, ພົບປະຜູ້ມີສິດເລືອກຕັ້ງ ແລະ ການສ້າງຄວາມເຂັ້ມແຂງ



(ສພຊ) ຕອນບ່າຍວັນສຸກທີ 14 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ມີກອງປະຊຸມສະຫລຸບຕີລາຄາການເຄື່ອນໄຫວຕິດຕາມກວດກາ, ພົບປະຜູ້ມີສິດເລືອກຕັ້ງ ແລະ ຈັດຊຸດເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາປະຊາຊົນແຂວງ (ສສຂ) ອຸດົມໄຊ ແລະ ພະນັກງານຊ່ວຍວຽກ ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ; ມີຮອງປະທານ ສພຂ, ມີບັນດາທ່ານຄະນະປະຈຳ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອສະຫລຸບຕີລາຄາການເຄື່ອນໄຫວຕິດຕາມກວດກາໂຄງການຂຸດຄົ້ນແຮ່ຄຳຂອງບໍລິສັດ ລາວຊິນຫລົງບຸກເບີກອຸດສາຫະກຳບໍ່ແຮ່ ຈຳກັດ ຢູ່ເມືອງປາກແບງ, ການພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ແລະ ການຈັດຊຸດເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ ສສຂ ແລະ ພະນັກງານຊ່ວຍວຽກດັ່ງກ່າວ ເຊິ່ງເຫັນວ່າມີຂໍ້ສະດວກ, ຂໍ້ຫຍຸ້ງ ແລະ ມີຜົນໄດ້ຮັບ, ວິທີທາງແກ້ໄຂຂໍ້ຄົງຄ້າງຕ່າງໆ ເພື່ອເຮັດໃຫ້ການບັນຫາເຫລົ່ານັ້ນໄດ້ຮັບການແກ້ໄຂໃຫ້ຖືກຕ້ອງ, ສອດຄ່ອງ ແລະ ທ່ວງທັນກັບເວລາ; ພ້ອມນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນ ແລະ ມີຄຳສະເໜີແລກປ່ຽນກັນຢ່າງກົງໄປກົງມາ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນສະຫລຸບ ໂດຍທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຄະນະຮັບຜິດຊອບທີ່ໄດ້ກະກຽມບັນດາຂໍ້ມູນ ແລະ ເນື້ອໃນຕ່າງໆ ເຮັດໃຫ້ການເຄື່ອນໄຫວສຳເລັດຕາມກຳນົດເວລາ. ພ້ອມດຽວກັນນັ້ນ, ຍັງເຫັນໄດ້ບັນຫາຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ.

(ແສງພອນ ອິນນະລົງ)

## ຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 3



(ສພຊ) ຕອນເຊົ້າວັນທີ 21 ຕຸລາ 2022 ທີ່ສະໂມສອນເມືອງຜົ້ງສາລີ ໄດ້ຈັດກອງປະຊຸມຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຜົ້ງສາລີ ຊຸດທີ II ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ; ມີສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າບັນດາພະແນກການອ້ອມຂ້າງແຂວງ, ຫົວໜ້າ-ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ພ້ອມດ້ວຍພະນັກງານ-ລັດຖະກອນຈາກພະແນກການອ້ອມຂ້າງແຂວງ ແລະ ບັນດານາຍທະຫານ-ຕຳຫຼວດ ຈາກ 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເຂົ້າຮ່ວມ.

ໃນທີ່ປະຊຸມໄດ້ຮັບຟັງທ່ານ ທຸມເພັງ ຈອມວິສານ ຮອງປະທານສະພາປະຊາຊົນແຂວງ ຂຶ້ນເຜີຍແຜ່ມະຕິກອງປະຊຸມສະພາປະຊາຊົນແຂວງ ມີຈຳນວນ 10 ມະຕິ; ປະກອບມີວຽກງານບຸກຄະລາກອນ, ວຽກງານຂອງອົງການປົກຄອງແຂວງ, ວຽກງານການເຄື່ອນໄຫວຂອງສະພາປະຊາຊົນແຂວງ ແລະ ວຽກງານການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງການຮັບຮອງເອົານິຕິກຳໃຕ້ກົດໝາຍຂອງແຂວງ 4 ສະບັບ ຄື: ມະຕິວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສະກັດກັ້ນ, ຕ້ານ ແລະ ແກ້ໄຂຢາເສບຕິດ ຢູ່ແຂວງຜົ້ງສາລີ ສະບັບເລກທີ 42/ສພຂ, ວັນທີ 25 ສິງຫາ 2022; ມະຕິວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດລາຄາຫົວໜ່ວຍການຊົດເຊີຍຜົນກະທົບຈາກໂຄງການພັດທະນາພື້ນຖານໂຄງລ່າງຢູ່ແຂວງຜົ້ງສາລີ ສະບັບເລກທີ 43/ສພຂ, ວັນທີ 25 ສິງຫາ 2022; ມະຕິວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການສ້າງກອງທຶນກິລາ-ກາຍຍະກຳຂອງແຂວງຜົ້ງສາລີ ສະບັບເລກທີ 44 /ສພຂ, ວັນທີ 25 ສິງຫາ 2022; ມະຕິວ່າດ້ວຍການຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການຈັດງານບຸນປະເພນີຢູ່ແຂວງຜົ້ງສາລີ ສະບັບເລກທີ 45/ສພຂ, ວັນທີ 25 ສິງຫາ 2022; ນອກຈາກນັ້ນ, ທ່ານຍັງໄດ້ຜັນຂະຫຍາຍກ່ຽວກັບການກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ແລະ ມະຕິອື່ນໆອີກຈຳນວນໜຶ່ງ.

ໂອກາດດຽວກັນນີ້, ຍັງໄດ້ຮັບຟັງທ່ານ ທອງສີ ເສົາສຸລິພົມ ເຜີຍແຜ່ມະຕິກອງປະຊຸມຂອງສະພາແຫ່ງຊາດ ຈຳນວນ 21 ມະຕິ ເຊິ່ງມີບາງຕອນຂອງເນື້ອໃນມະຕິກອງປະຊຸມທ່ານໄດ້ກ່າວວ່າ: "ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນ 6 ເດືອນຕົ້ນປີ 2022 ລວມຍອດຜະລິດຕະພັນພາຍໃນ GDP ເພີ່ມຂຶ້ນ 4,3% ຂອງແຜນການປີ (ມະຕິຂອງສະພາແຫ່ງຊາດ 4,5%); ການປະຕິບັດຄາດໝາຍແຜນເງິນຕາ ຫຼື ປະລິມານເງິນຂະຫຍາຍຕົວໃນລະດັບ 13,31%, ກໍລະນີລວມການປ່ຽນແປງຂອງອັດຕາແລກປ່ຽນ ແມ່ນຂະຫຍາຍຕົວເຖິງ 42,78% ທຽບໃສໄລຍະດຽວກັນຂອງປີຜ່ານມາ; ອັດຕາແລກປ່ຽນເງິນກີບທຽບກັບເງິນໂດລາ ອ່ອນຄ່າ 12,12%, ເງິນກີບທຽບກັບເງິນບາດອ່ອນຄ່າ 12,66%, (ມະຕິສະພາແຫ່ງຊາດ ±5%), ອັດຕາແລກປ່ຽນຢູທະນາຄານ ແລະ ນອກລະບົບຂອງທະນາຄານ ສຳລັບເງິນກີບທຽບໃສ່ເງິນໂດລາ ແຕກໂຕນ 10,81%, ເງິນກີບທຽບໃສ່ບາດແຕກໂຕນ 3,44%; ຄາດໝາຍດ້ານແຜນງົບປະມານ ທີ່ເຫັນວ່າຍັງມີຄວາມສ່ຽງທີ່ຈະບໍ່ບັນລຸຕາມແຜນການປີ ເຊິ່ງການເກັບລາຍຮັບເຂົ້າງົບປະມານປະຕິບັດໄດ້ 43,35% ຂອງແຜນການປີ (ມະຕິສະພາແຫ່ງຊາດ 31.593 ຕື້ກີບ) ແລະ ປະຕິບັດລາຍຈ່າຍງົບປະມານ ໄດ້ພຽງແຕ່ 35,39% (ມະຕິສະພາແຫ່ງຊາດ 34.691 ຕື້ກີບ); ການປະຕິບັດຄາດໝາຍການລະດົມແຫຼ່ງທຶນເພື່ອການພັດທະນາຍັງໄດ້ໜ້ອຍ, ການຂຶ້ນທະບຽນອອກໃບຕາດິນປະຕິບັດໄດ້ພຽງ 32.706 ຕອນ ເທົ່າກັບ 10,9% ຂອງແຜນການປີ (ມະຕິສະພາແຫ່ງຊາດ 300.000 ຕອນ) ແລະ ການປະຕິບັດບັນດາຄາດໝາຍສູ້ຊົນໃນວຽກງານຂົງເຂດວັດທະນະທຳ-ສັງຄົມ ຫຼາຍຄາດໝາຍບໍ່ມີຄວາມຄືບໜ້າ ແລະ ມີຄວາມສ່ຽງທີ່ຈະບໍ່ສາມາດ ບັນລຸໄດ້ຕາມມະຕິຂອງສະພາແຫ່ງຊາດ; ພ້ອມກັນນັ້ນ ທ່ານຍັງໄດ້ຍົກໃຫ້ເຫັນເຖິງທິດທາງລວມຂອງການຈັດຕັ້ງປະຕິບັດແຜນພັດທະນາໃນຕໍ່ໜ້າ ທັງຮຽກຮ້ອງໃຫ້ທຸກພາກສ່ວນເປັນເຈົ້າການປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ລຸຕາມແຜນການທີ່ຮັບຮອງ ເປັນຕົ້ນແມ່ນເຮັດໃຫ້ເສດຖະກິດຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ມີຄຸນນະພາບ ຕາມທິດສີຂຽວ ແລະ ຍືນຍົງ; ການພັດທະນາຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ; ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ; ການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ; ການສ້າງໂຄງລ່າງພື້ນຖານໃຫ້ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດດ້ານທີ່ຕັ້ງພູມມີສາດໃນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ; ການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ."

ຈາກນັ້ນ, ທີ່ປະຊຸມຍັງໄດ້ຮັບຟັງຄຳເຫັນຈາກຜູ້ແທນກອງປະຊຸມຈຳນວນໜຶ່ງ ທັງນີ້ກໍເພື່ອເປັນບ່ອນອີງໃຫ້ສະພາປະຊາຊົນແຂວງ, ອົງການບໍລິຫານລັດ ຄົ້ນຄວ້າແກ້ໄຂ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະຂົງເຂດ ທັງເປັນປັບປຸງອຳນາດລັດຂັ້ນທ້ອງຖິ່ນມີຄວາມເຂັ້ມແຂງ ໂດຍສະເພາະແມ່ນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ຫັນເຂົ້າສູ່ລະບຽບ, ກົດໝາຍເທື່ອລະກ້າວ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

## 3 ຄະນະກຳມະການ ຫາລືກະກຽມເຄື່ອນໄຫວຕິດຕາມກວດກາ



(ສພຊ) ຕອນເຊົ້າຂອງວັນອັງຄານທີ 18 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, 3 ຄະນະກຳມະການຄື: ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງອຸດົມໄຊ ໄດ້ປຶກສາຫາລື ແລະ ກະກຽມເຄື່ອນໄຫວຕິດຕາມກວດກາປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ; ມີຮອງປະທານ ສພຂ, ບັນດາທ່ານຄະນະປະຈຳຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມແມ່ນເພື່ອປຶກສາຫາລື ແລະ ກະກຽມເຄື່ອນໄຫວຕິດຕາມກວດກາ ປະຈຳປີ 2022 ເປັນຕົ້ນແມ່ນການກຳນົດເນື້ອໃນທີ່ຈະລົງຕິດຕາມກວດກາ, ເປົ້າໝາຍການລົງຕິດຕາມກວດກາ, ຄາດຄະເນຜົນໄດ້ຮັບ, ກຳນົດວັນເວລາ, ສະຖານທີ່ ແລະ ອື່ນໆ ເພື່ອເປັນບ່ອນອີງ ແລະ ຮັບປະກັນໃຫ້ແກ່ການເຄື່ອນໄຫວຕິດຕາມກວດກາໃຫ້ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ.

ກອງປະຊຸມທ່ານ ທອງໄຊ ທໍ່ຈົງເລ່ຍຈີ ປະທານຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ໄດ້ຕາງໜ້າຄະນະຮັບຜິດຊອບ ຜ່ານແຜນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຢູ່ຂັ້ນເມືອງ ແລະ ໄດ້ຜ່ານຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ເລກທີ 04/ຄປຈ, ລົງວັນທີ 18 ກໍລະກົດ 2022 ກ່ຽວກັບການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ວ່າດ້ວຍແຜນການຮັບຮອງເອົາແຜນການຕິດຕາມກວດກາວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ຫລັງຈາກນັ້ນ, ບັນດາທ່ານຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດເຫັນ ແລະ ມີຄຳສະເໜີແລກປ່ຽນກັນຢ່າງກົງໄປກົງມາ.

ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນສະຫລຸບ ທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຄະນະຮັບຜິດຊອບທີ່ໄດ້ກະກຽມບັນດາເນື້ອໃນຕ່າງໆ ແລະ ບັນຫາພື້ນຖານສຳຄັນອື່ນໆ ເພື່ອເຮັດໃຫ້ການເຄື່ອນໄຫວຕິດຕາມກວດກາເຫັນໄດ້ດ້ານດີ ແລະ ດ້ານອ່ອນ-ຂໍ້ຄົງຄ້າງ ເພື່ອຫາວິທີແກ້ໄຂ ໃນການຈັດຕັ້ງປະຕິບັດບັນດາຄາດໝາຍ ແລະ ມາດຕະການຕ່າງໆຂອງແຜນພັດທະນາເສດຖະກິດ-ສັງຄົມ ແນໃສ່ເຮັດໃຫ້ພະແນກການ ແລະ ຫ້ອງການທີ່ກ່ຽວຂ້ອງ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ຖືກຕ້ອງຕາມກົດໝາຍ.

(ແສງພອນ ອິນນະລົງ)

## ກຽມຄັດເລືອກຕົວແທນເຂົ້າຮ່ວມແຂ່ງຂັນກິລາເປຕັງ ຊີງຂັນປະທານສະພາແຫ່ງຊາດ



(ສພຊ) ເພື່ອເປັນການຈັດຕັ້ງຜັນຂະຫຍາຍໜັງສືແຈ້ງເຊີນຂອງສະຫະພັນກິລາເປຕັງແຫ່ງຊາດ ສະບັບເລກທີ 084/ສປຕ ກ່ຽວກັບເຊີນນັກກິລາຂັ້ນແຂວງເຂົ້າຮ່ວມງານແຂ່ງຂັນກິລາເປຕັງທົ່ວປະເທດ ຄັ້ງທີ X ຊີງຂັນປະທານສະພາແຫ່ງຊາດ; ໃນຕອນເຊົ້າວັນທີ 24 ຕຸລານີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄັດເລືອກເອົາຕົວແທນນັກກິລາເປຕັງຂອງແຂວງສາລະວັນ ກະກຽມເຂົ້າຮ່ວມງານແຂ່ງຂັນກິລາເປຕັງດັ່ງກ່າວ ທັງເປັນການສ້າງຂະບວນຂໍ່ານັບຮັບຕ້ອນສະເຫຼີມສະຫຼອງວັນສຳຄັນຕ່າງໆຂອງຊາດ ພ້ອມທັງກະກຽມຄວາມພ້ອມໃຫ້ແກ່ນັກກິລາທີ່ຈະເຂົ້າຮ່ວມງານມະຫະກຳກິລາແຫ່ງຊາດ ຄັ້ງທີ XI ທີ່ແຂວງຊຽງຂວາງ ແລະ ເປັນການຄັດເລືອກເອົານັກກິລາແຫ່ງຊາດ ເຂົ້າຮ່ວມແຂ່ງຂັນເປຕັງລະດັບອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

ງານແຂ່ງຂັນກິລາເປຕັງທົ່ວປະເທດ ຄັ້ງທີ X ຊີງຂັນປະທານສະພາແຫ່ງຊາດ ປະກອບລວມມີ 6 ລາຍການ ຄື: ມີປະເພດຍິງດ່ຽວ ແລະ ຊາຍດ່ຽວ, ຍິງຄູ່ ແລະ ຊາຍຄູ່, ທີມປະສົມ (ຍິງ 1+ຊາຍ1) ແລະ ທີມຄູ່ກິຕິມະສັກ; ການແຂ່ງຂັນແມ່ນຈະໃຊ້ເວລາທັງໝົດ 3 ວັນ, ເລີ່ມແຕ່ວັນທີ 9-11 ພະຈິກ 2022 ຢູ່ທີ່ສະໜາມກິລາເປຕັງແຫ່ງຊາດ ບ້ານດົງໂດກ ເມືອງໄຊທານີ ນະຄອນຫຼວງວຽງຈັນ.

ກອງປະຊຸມປຶກສາຫາລືຄັ້ງນີ້ ໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ທອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 14 ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ, ຕາງໜ້າຈາກສະຫະພັນກິລາເປຕັງແຂວງ, ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ພ້ອມດ້ວຍພະນັກງານພາຍໃນສະພາປະຊາຊົນແຂວງ.

(ດີລຳພົນ ພົມມະຈັນ)

## ເລືອກຕັ້ງຄະນະໜ່ວຍຊາວໜຸ່ມ ສພຂ ຊຸດໃໝ່



(ສພຊ) ວັນທີ 18 ຕຸລາ 2022 ທີ່ຫ້ອງປະຊຸມໃຫຍ່ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ໄດ້ເປີດກອງປະຊຸມເລືອກຕັ້ງເລຂາ-ຮອງເລຂາຂອງໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ວຽງໄຊ ສັກລຳດວນ ກຳມະການຄະນະບໍລິຫານງານຊາວໜຸ່ມແຂວງ ແລະ ເປັນປະທານຮ່ວມໂດຍສະຫາຍ ມີໄຊ ມີວິໄລ ຄະນະໜ່ວຍພັກ, ຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ, ມີຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍສະມາຊິກຊາວໜຸ່ມພາຍໃນໜ່ວຍເຂົ້າຮ່ວມທັງໝົດ 24 ສະຫາຍ ຍິງ 16 ສະຫາຍ.

ກອງປະຊຸມໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະຊຸດໃໝ່ ເຊິ່ງສາມາດເລືອກຕັ້ງໄດ້ສະຫາຍ ມີກສະຫວັນ ແກ້ວບົວພາ ເປັນເລຂາໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ ແລະ ເລືອກຕັ້ງເອົາສະຫາຍ ທອງລຸນ ອູ່ຄຳຫຼ້າ ເປັນຮອງເລຂາໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງ.

ໂອກາດດັ່ງກ່າວ, ຍັງໄດ້ຮັບຟັງການໂອ້ລົມ ແລະ ໃຫ້ການຊີ້ທິດເນືອງທາງຈາກສະຫາຍ ວຽງໄຊ ສັກລຳດວນ ເພື່ອໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານສະພາປະຊາຊົນແຂວງຊຸດໃໝ່ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຊາວໜຸ່ມຮາກຖານສະພາປະຊາຊົນແຂວງ ໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ.

ກອງປະຊຸມໄດ້ດຳເນີນເປັນເວລາໜຶ່ງຕອນ ແລະ ອັດລົງໃນຕອນເຊົ້າຂອງວັນດຽວກັນ ດ້ວຍຜົນສຳເລັດອັນຈົບງາມ.

(ນັກຂ່າວ ສພຂ ຫຼວງນໍ້າທາ)



## ສຸກສະບາຍຫາຍໂຣຄາ

# ວິທີເລືອກກິນອາຫານຕາມກຸ໊ບເລືອດ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ




**ກຸ໊ບ A:** ຄວນກິນອາຫານເຈ ເພາະວ່າຄົນກຸ໊ບ A ກິນຊີ້ນໜ້ອຍທີ່ສຸດ ເນື່ອງຈາກມີກົດໃນກະເພາະອາຫານຕໍ່າ ຕ້ອງກິນປະເພດປາ ເພື່ອຊ່ວຍເສີມສ້າງໂປຣຕີນ ແລະ ປະເພດຜັກຈະດີທີ່ສຸດ ໂດຍສະເພາະແມ່ນຜັກບົ່ວ ແລະ ຫົວຜັກທຽມ ທີ່ມີສານຕ້ານອະນຸມູນອິດສະຫລະ carotene, ຜັກບົ້ງ, ຜັກຫົມ ແລະ ຜັກທຽມ ຊ່ວຍກະຕຸ້ນພູມຕ້ານທານ; ກິນໝາກໄມ້ເກືອບທຸກຊະນິດ ຍົກເວັ້ນໝາກໂມ, ໝາກອຶ, ໝາກມ່ວງ, ໝາກຫຸ່ງ, ໝາກກ້ວຍ, ໝາກກ້ຽງ ເພາະວ່າມັນຍ່ອຍຍາກສໍາລັບຄົນກຸ໊ບເລືອດເອ ແລະ ຄວນດື່ມຊາສະໝຸນໄພຈະເພີ່ມກົດໃນກະເພາະອາຫານໄດ້ເປັນຢ່າງດີ ແລະ ນົມຖົ່ວເຫລືອງ, ນົມແບ້, ນົມສົ້ມ, ໂຢເກີດ ທີ່ມີໄຂມັນຕໍ່າແທນນົມງົວ ແຕ່ຄວນຫລີກລ່ຽງເບຍ ແລະ ນໍ້າອັດລົມ.

**ກຸ໊ບ B:** ກຸ໊ບນີ້ ສາມາດກິນທັງຊີ້ນ ແລະ ຜັກ ແຕ່ຕ້ອງກິນໃນປະລິມານທີ່ເໝາະສົມ ເພາະເປັນໝວດເລືອດທີ່ຕຸ້ຍງ່າຍ ອາຫານຂອງຄົນກຸ໊ບເລືອດ B ແມ່ນຊີ້ນແກະ, ຊີ້ນແບ້, ຜັກທຽມ, ຈໍາພວກປາ, ກະລໍ່າປີ, ບ້ອກໂຄລີ, ຂີງ, ຂີ້ໝິ້ນ, ຫົວຜັກບົ່ວ, ຫົວຜັກບົ່ວນ້ອຍ, ກະທຽມ ,ໝາກນັດ, ລູກພັບ, ໝາກອາງຸ່ນ, ໝາກໂມ, ໝາກນາວ, ໝາກເຊີຣີ, ນໍ້າມັນໝາກກອກ, ໝາກສະໝອງລີງ, ຊາຂຽວ, ໂຢເກີດ.

**ກຸ໊ບ AB:** ກຸ່ມນີ້ ແມ່ນປະສົມຂອງກຸ່ມ A ແລະ B ສະນັ້ນ, ອາຫານທີ່ຄວນຮັບປະທານ ກໍມີຄວາມຄ້າຍຄືກັນ ເຊັ່ນ: ຈໍາພວກປາ, ກະລໍ່າປີ, ກະລໍ່າປີດອກ, ບ້ອກໂຄລີ, ຜັກທຽມ, ຂີງ, ຂີ້ໝິ້ນ, ຜັກບົ່ວ, ຫົວຜັກບົ່ວນ້ອຍ, ເຊີຣີ, ໝາກເລັ່ນ, ໝາກນາວ, ໝາກນັດ, ໝາກອາງຸ່ນ, ຖົ່ວເຫລືອງ, ໝາກສະໝອງລີງ, ນໍ້າມັນໝາກກອກ, ຊາຂຽວ ແລະ ນົມສົ້ມ.

**ກຸ໊ບ O:** ສາຍຕ່ອນຕ້ອງເປັນຂອງກຸ໊ບນີ້ຢ່າງແນ່ນອນ ເພາະວ່າຄົນກຸ໊ບໂອ ຈະມີກົດໃນກະເພາະອາຫານຫລາຍ ຈຶ່ງສາມາດຍ່ອຍອາຫານຈໍາພວກຊີ້ນໄດດີກ່ວາກຸ໊ບອື່ນໆ ແຕ່ຄົນໃນກຸ່ມນີ້ກໍຕຸ້ຍງ່າຍເຊັ່ນດຽວກັນ ດັ່ງນັ້ນ, ຄວນຫລີກລ່ຽງອາຫານທີ່ມີທາດແປ້ງ ເຊັ່ນ: ເຂົ້າ, ແປ້ງ, ນໍ້າຕານ, ລວມທັງຖົ່ວຊະນິດຕ່າງໆ ແລະ ອາຫານທີ່ຄວນຮັບປະທານເລື້ອຍໆແມ່ນຊີ້ນງົວ, ເຂົ້າໜົມປັງ,ຈໍາພວກປາ, ໝາກຫຸ່ງ, ຜັກຫົມ, ບ້ອກໂຄລີ, ສາລ່າຍທະເລ, ເຊີຣີ, ບູເບີຣີ, ໝາກນັດ, ຊາຂຽວ, ນໍ້າມັນໝາກກອກ, ຜັກທຽມ, ຂີງ, ຂີ້ໝິ້ນ, ຫົວຜັກບົ່ວ, ຜັກບົ່ວ ແລະ ໝາກສະໝອງລີງ.

**ແຫລ່ງຂໍ້ມູນ: www.thairath.co.th**

## ສາລາກະວີ

# ຄູພູດອຍ

**# ໂດຍ: ລູກເທດສາມປາງ**

◆ ພູຜາເຫວຮ່ອມຫ້ວຍ
ເປັນຊອຍວອຍສູງຊັນ
ພຶກສາຊອນແຊມຂຶ້ນ
ມ່ານໝອກມົວຍິ່ງຍ້ອມ

ຂຶນໄຂວ່ເນີນດອຍ
ກ່າຍກັນກວມພື້ນ
ເຕັມຜືນຢາຍທົ່ວ
ໄຫລອ້ອມໜ່ວຍພູ

◆ ໂງ່ເງເຂົາໃຫຍ່ນ້ອຍ
ຫ້ວຍນໍ້າໃສລິນລິ່ງ
ບ້ານບ່ອນເຮືອນແຖວຈ້າຍ
ເຫັນຄາເມໝູ່ບ້ານ

ຫລາຍຍ່ານຍາວໄກ
ຮ່ອມພະນັງຫີນກ້ອນ
ສາຍພູຢາຍຢູ່
ລຽນຖ້ານຕໍ່ຖານ

◆ ນັບວ່ານານຖ່ອງຖ້ວນ
ຮຽນຈາກລາເຮືອນຊານ
ໜ້າທີ່ຫົນທານສູ້
ຈິງໃຈມາກໍ່ສ້າງ

ເດີນດ່ອນວຽນມາ
ດຸ່ງດັນແດນຜີ້
ວິຊາຄູວຽກໃຫຍ່
ທາງກ້ຳແກ່ວດອຍ

◆ ເດັກນ້ອຍຫລານອ່ອນຫລ້າ
ພູມລໍາເນົາເນີນພູ
ຍັງງົມງອມຫງອຍງໍ້າ
ບ້ານປ່າເຫີນຫ່າງເບື້ອງ

ເຂດປ່າຊາວເຂົາ
ຂາດຄູເຫລົາສ້ອມ
ເງົາດໍາໄຮ້ສະຫວ່າງ
ເມືອງກວ້າງຮຸ່ງສະໄໝ

◆ ເຖິງແມ່ນໄກຍິ່ງເຍັ້ນ
ຈັນຍາທໍາຂອງຄູ
ປຽບເກືອເຄັມຂັ້ງຂ້ອນ
ເພີ່ມຄວາມເຄັມລື່ນເລື້ອຍ

ແດນຖິ່ນຈະເລີນຕາ
ທ່ຽງຕຶງແຂງເຂັ້ມ
ນິລັນດອນບໍ່ຈາງເປື່ອຍ
ສະຖິດໝັ້ນບໍ່ອ່ອນໄຫວ

◆ ຊາດມອບໝາຍຕໍ່ຕັ້ງ
ປະຊາກອນເດັກດອຍ
ເຂດກັນດານວິຊາດ້ອຍ
ລໍຄູສອນຊ່ວຍຍູ້

ຄູສັ່ງລົງສອນ
ຊ່ອຍແຍງຍໍປັ້ນ
ເດັກຄອຍຄູຢູ່
ຄວາມຮູ້ສິ່ງວິຊາ

◆ ຮຽນອາສາດຸ່ງໜ້າ
ສອນຂີດຂຽນກໍກາ
ໃຫ້ພວກເຂົາເຫັນແຈ້ງ
ບໍ່ໃຫ້ຄາເຄິ່ງຄ້າງ

ຫລອມຫລໍ່ນໍາຮຽນ
ທຸກວິຊາພາເວົ້າ
ຫູຕາແສງສະຫວ່າງ
ຂຽນໄດ້ອ່ານເປັນ

◆ ເສັ້ນທາງເດີນຍາກຫຍຸ້ງ
ແຕ່ວ່າຮຽນສຸກໃຈ
ໃຫ້ລູກຫລານດອຍໄດ້
ຄວາມຮູ້ໄຂຄ່ອງແຄ້ວ

ລຽບລັ່ນພູຜາ
ໃຝ່ສອນຫລານນ້ອຍ
ປັນຍາໄວບັ້ນໃໝ່
ແວວກ້າສະຫງ່າໃສ

◆ ໂຮງຮຽນໄກຫ່າງໂຄ້ງ
ມວນໝູ່ເດັກຊາວດອຍ
ເຂົ້າມາຮຽນຫລາຍໜ້າ
ສາຍເລືອດຄູຢ່າງຂ້ອຍ ຄອຍສຶກສອນບໍ່ທໍ້

ທາງກິ່ງສາຍພູ
ຍ່າງວອຍມາເຕົ້າ
ອາຄານຝາແປ້ນຫ່າງ
ພໍນ້ອຍທ່ອງໃຍ ດອກນາ!

## ເບີໂທສຸກເສີນ

**໐ ຕໍາຫລວດ**

- ປກສ ນະຄອນຫລວງ 021 419119
- ກົມຕໍາຫລວດສືບສວນ-ສອບສວນ 021 970093
- ກົມຕໍາຫລວດປ້ອງກັນຢາເສບຕິດ 021 217258
- ກົມຕໍາຫລວດເສດຖະກິດ 021 212519



## ສັກຫາຍ ລະບາຍ

**# ສາວຈົ້ມ**

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

໐ **ບຸນ**ນະມັດສະການພະທາດຫລວງຮຽງຈັບປີນີ້ ຈັດຍິ່ງໃຫຍ່ມີຫລາຍກິດຈະກໍາ ແລະ ເພື່ອບໍ່ໃຫ້ມີການແອອັດຄະນະຮັບຜິດຊອບຈັດງານບຸນ ໄດ້ກໍານົດການຈັດງານຢູ່ສູນການຄ້າລາວ-ໄອເຕັກ ເລີ່ມແຕ່ວັນທີ **2-8 ພະຈິກ** ໂດຍມີຮອງຮັບແລ້ວ **488 ບູດ** ສ່ວນເດີ່ນ**ທາດຫລວງ** ແລະ **ສະໜາມຫລວງ** ປະກອບມີການວາງສະແດງການທ່ອງທ່ຽວ ນະວັດຕະກໍາໃໝ່ ທາງໄພຄວາມໄວສູງ **ເຂດໂລຈິດສະຕິກທາງດ່ວນ** ແມ່ນຮ້ານວາງສະແດງສິນຄ້າຈາກ ສສ.ຫວຽດນາມ (ຮ່າໂນ້ຍ ໂຮ່ຈິມິງ ຢ່າຈາງ) ສິນຄ້າຜະລິດຕະພັນພາຍໃນ ແລະ ວາງສິນຄ້າປະເພດທ່ອງທ່ຽວ ຄາດຄະເນ **215 ຫ້ອງ** ສິນຄ້າຊາເຂົ້າ-ຊາອອກ ເສື້ອຜ້າ ສິນຄ້າທົ່ວໄປ ແລະ ເຄື່ອງຫລິ້ນ **669 ຫ້ອງ** ປະເພດອາຫານ ແລະ ເຄື່ອງດື່ມຢູ່ເຂດຮອບນອກ **134 ຫ້ອງ**ລວມທັງໝົດ **1.018 ຫ້ອງ** ຄົນຫາກໃຜທີ່ຕ້ອງ ການທ່ຽວໂຊນໃດ ກໍກຽມຈິດກຽມໃຈ ທ່ຽວທໍ່ຕາມນັ້ນ ຊໍ້ມູນມີກຽມໃຫ້ ຈັດເວລາເດີນລົດ ເພື່ອຫລຸດຜ່ອນຫລີກລ້ຽງເສັ້ນທາງລົດອັ່ງແໜ້ນ ຕິດແຫຍ້ໃຫ້ຜ່ອນລົງ **ທ່ານເອີຍ!**

໐ **ຫລັງ**ຈາກເປີດ**ນໍາໃຊ້**ເສັ້ນທາງລົດໄຟ**ລາວ-ຈີນ**ບໍ່ທັນຮອດປີ ກໍໄດ້ມີຜູ້ໂດຍສານໃຊ້ບໍລິການ **739 ລ້ານເທື່ອຄົນ** ແລະ ຂົນສົ່ງສິນຄ້າສະສົມໄດ້ **851 ລ້ານໂຕນ** ພ້ອມນັ້ນ ເພື່ອຕອບສະໜອງຕາມຄວາມຕ້ອງການໃນການເດີນທາງຂອງປະຊາຊົນໃຫ້ພຽງພໍ ທາງບໍລິສັດຍັງໄດ້ຄົ້ນຄວ້າຮູບແບບໃໝ່ **"ເສັ້ນທາງດ່ວນລ້ານຊ້າງ"** ອີຄອມເມີດຂ້າມແດນ **"ທາງລົດໄຟລາວ-ຈີນ, ທາງລົດໄຟຈີນ-ເອີລົບ"** ເປັນການຂົນສົ່ງທາງລົດໄຟ**ຮູບແບບໃໝ່ລະຫວ່າງປະເທດ** ເພື່ອໃຫ້ຫລາຍວິສາຫະກິດໄດ້ຮັບໂອກາດ ແລະ ຜົນປະໂຫຍດ ຊຸກຍູ້ພັດທະນາເສດຖະກິດສັງຄົມຂອງ ສປປລາວ ໃຫ້ມີບົດບາດ ແລະ ຫລຸດພົ້ນຈາກດ້ອຍພັດທະນາ ພຽງວ່າຍືນລ່າວຊໍ້ ອະນາຄົດຊິເຮືອງໃສ ຮຽນກໍແສນພູມໃຈ ທີ່ເກີດໃນແດດດ້າວ ຜືນດິນລາວແດນນີ້ ຊິເຮືອງສີຄືຄໍາຊໍ່າ ມັນຊິໂປ້ງບາດຫລ້າໝາກແຕງຊ້າງໝ່ອຍປາຍ **ແທ້ໆແລ້ວ!**

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ບັດໃໝ່**

ມື້ເປີດສົກຮຽນໃໝ່ ຫລັງຈາກນັກສຶກສາເຂົ້າຫ້ອງ ແລະ ອາຈານກໍໄດ້ສໍາພາດເກືອບໝົດທຸກຄົນ, ສາວ ກູດ້ງອງ ຈຶ່ງໄປຮອດ; ລາວນຸ່ງສິ້ນເຂີນໆເກືອບກາຍຫົວເຂົ່າ ແລະນຸ່ງເສື້ອຮັດໆ ຈົນໃຜແນມເບິ່ງ ກໍຮູ້ສຶກອຶດອັດຕາງ, ລາວຍ່າງເຂົ້າໄປໃນຫ້ອງ ນັ່ງໂຕະໜ້າຊາໄຂວ່ຫ້າງ ພ້ອມທັງປ່ອຍຮອຍຍິ້ມໃສ່ອາຈານດ້ວຍສາຍຕາລັກໄກ່, ພໍ ແຕ່ອາຈານສັງເກດເບິ່ງບຶດໜຶ່ງຈຶ່ງຖາມຂຶ້ນວ່າ :

**ອາຈານ:** ຈະໃຫ້ອາຈານສໍາພາດດຽວນີ້ ຫລືຊິໃຫ້ອາຈານບັດພົບຕ່າງຫາກ;

**ສາວກູດ້ງອງ ແນມເບິ່ງອາຈານທັງຍິ້ມ ແລະ ຕອບວ່າ ບັດກະໄດ້**

**ອາຈານ :** ຄັນຊັ້ນອາຈານບັດພົບປີໜ້າເດີ ປີນີ້ບໍ່ຕ້ອງຮຽນດອກ!

ສາວກູດ້ງອງ : !!! ???

## ຄະຕິເຕືອນໃຈ

**#ດອກລະຍອມ**

ຢ່າຊູຫລັງສຸກຍ້ອນ
ສຸກກໍສຸກເພີ່ນພຸ້ນ

ບຸນເຂົາມາເພິ່ງ
ບໍ່ມີກຸ້ມຮອດເຮົາ ດອກນາ!

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

## ກົດໝາຍ
## ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

### ພາກທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແລະ ທັນສະໄໝ ແນໃສ່ເຮັດໃຫ້ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ດຳເນີນໄປຢ່າງເປັນເອກະພາບ, ຖືກຕ້ອງ, ຊັດເຈນ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການສຳຫຼວດວັດແທກ ແມ່ນ ຂະບວນການທາງດ້ານວິທະຍາສາດ ກ່ຽວກັບການສຶກສາຄົ້ນຄວ້າຮູບຮ່າງ ແລະ ຂະໜາດຂອງໜ່ວຍໂລກ, ການເກັບກຳຂໍ້ມູນລາຍລະອຽດສິ່ງທີ່ປາກົດຢູ່ເທິງພື້ນຜິວໂລກ ແລະ ການຄິດ ໄລ່ບົນພື້ນຖານການນຳໃຊ້ລະບົບຂໍ້ມູນເຄົ້າການສຳຫຼວດວັດແທກແຫ່ງຊາດ.

ການສ້າງແຜນທີ່ ແມ່ນ ຂະບວນການທາງດ້ານເຕັກນິກ ຊຶ່ງປະກອບດ້ວຍ ການອອກແບບ ແລະ ຕົກ ແຕ່ງແຕ້ມ, ການເກັບກຳຂໍ້ມູນພູມສາດ, ການຂຽນຊື່ພູມີປະເທດ, ການສ້າງຖານຂໍ້ມູນ ແລະ ການພິມແຜນທີ່.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້: ເປົ້າໝາຍດ້ານພູມສາດ ໝາຍເຖິງ ວັດຖຸສິ່ງຂອງທີ່ປາກົດໃນໂລກທີ່ເປັນຈິງ ຫຼື ຈິນຕະນາການ, ປາກົດການຄົງທີ່ ຫຼື ບໍ່ຄົງທີ່ ມີທີ່ຕັ້ງພູມສາດ ຢູ່ເທິງໜ້າດິນ, ພື້ນດິນ, ໜ້ານໍ້າ, ໃນນໍ້າ, ພື້ນນໍ້າ, ນ່ານຟ້າ;

ມາດຕາສ່ວນແຜນທີ່ ໝາຍເຖິງ ອັດຕາສ່ວນ ລະຫວ່າງ ໄລຍະໃນແຜນທີ່ທຽບໃສ່ໄລຍະພື້ນທີ່ຕົວຈິງ;

ລະບົບຂໍ້ມູນເຄົ້າການສຳຫຼວດວັດແທກແຫ່ງຊາດໝາຍເຖິງຮູບການສະແດງອອກທາງດ້ານຄະນິດ ສາດ ກ່ຽວກັບຮູບຮ່າງ ແລະຂະໜາດຂອງໜ່ວຍໂລກ;

ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໝາຍເຖິງ ຜົນຂອງການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ຕາມມາດຕະຖານເຕັກນິກຂອງການສຳຫຼວດວັດແທກ ແລະ ສ້າງແຜນທີ່;

ຕາໜ່າງການສຳຫຼວດວັດແທກຂັ້ນເຕັກນິກ ໝາຍເຖິງ ຕາໜ່າງການສຳຫຼວດວັດແທກຂອງຂະແໜງ ການທີ່ສຳຫຼວດວັດແທກເກາະກ່າຍມາຈາກຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ;

ຂອບເຂດການປົກຄອງ ໝາຍເຖິງ ເຂດແດນຂອງບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງ ແລະ ປະເທດ ຕາມການກຳນົດຂອງອົງການທີ່ມີສິດອຳນາດ;

ຊື່ພູມີປະເທດ ໝາຍເຖິງ ຊື່ເອີ້ນຕາມຈຸດພິເສດຂອງຊື່ພູມສາດ, ຊື່ອຸທົກກະສາດ, ຊື່ທໍລະນີສາດ, ຊື່ພືກສາຊາດ, ສິ່ງປຸກສ້າງ, ເຂດແດນ ແລະ ອື່ນໆ;

ຊື່ພູມສາດ ໝາຍເຖິງ ຊື່ທີ່ເອີ້ນຕາມຈຸດພິເສດພູມສັນຖານ ຂອງແຕ່ລະເຂດ ເປັນຕົ້ນ ຊື່ ພູ, ຜາ, ຖໍ້າ,ເຫວ, ຫີນ, ຫາດຊາຍ, ດອນ;

ຊື່ອຸທົກກະສາດ ໝາຍເຖິງ ຊື່ສະຖານທີ່ຂອງບໍລິເວນນໍ້າ ເປັນຕົ້ນ ຊື່ ແມ່ນໍ້າ, ເຊ, ແກ້ງ, ອ່າງເກັບນໍ້າ,ຫ້ວຍ, ຮ່ອງ, ຄອງ, ໜອງ, ບຶງ, ເຂື່ອນ, ທາມ, ບໍ່ນໍ້າ, ໜອງສະ;

ຊື່ທໍລະນີສາດ ໝາຍເຖິງ ຊື່ສະຖານທີ່ຂອງແຮ່ທາດຕ່າງໆ ທີ່ປາກົດພົ້ນເດັ່ນຢູ່ໃນບໍລິເວນໃດໜຶ່ງເປັນຕົ້ນ ບໍ່ ຄຳ, ເງິນ, ທອງ, ເຫຼັກ, ກົ່ວ, ຊືນ; ຊື່ພືກສາຊາດ ໝາຍເຖິງ ຊື່ຂອງພືດພັນຊະນິດຕ່າງໆທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຕາມສະຖານທີ່ຕ່າງໆ ເປັນຕົ້ນ ຊື່ປ່າ, ຊື່ພືດລົ້ມລຸກ, ຊື່ພືດຢືນຕົ້ນ;

ສິ່ງປຸກສ້າງ ໝາຍເຖິງ ວັດຖຸສິ່ງຂອງຕ່າງໆທີ່ມະນຸດສ້າງຂຶ້ນ ຢູ່ຕາມສະຖານທີ່ຕ່າງໆ ເປັນຕົ້ນ ອາຄານ, ໂຮງຮຽນ, ໂຮງໝໍ, ເຮືອນ, ຕາໜ່າງຄົມມະນາຄົມ, ຕາໜ່າງໄຟຟ້າ, ຕາໜ່າງໂທລະຄົມມະນາຄົມ, ອະນຸສອນສະຖານ, ວັດ, ໂບດ, ມັດສະຢິດ, ທາດ, ປ່າຊ້າ;

ເສັ້ນຊາຍແດນແຫ່ງຊາດ ໝາຍເຖິງ ເສັ້ນແບ່ງເຂດແດນລະຫວ່າງປະເທດ;

ເສັ້ນເຂດແດນເຊື່ອມຕໍ່ ໝາຍເຖິງ ເສັ້ນຂອບເຂດການປົກຄອງລະຫວ່າງແຂວງກັບແຂວງ, ເມືອງກັບເມືອງ ແລະ ບ້ານກັບບ້ານ;

ການພິມດ້ວຍປລອດເຕີ (Plotter) ໝາຍເຖິງ ການພິມດ້ວຍເຄື່ອງພິມຜ່ານລະບົບຫົວສີດແຕ້ມລົງໃສ່ແຜ່ນເຈ້ຍໂດຍກົງ ດ້ວຍນໍ້າມຶກ ຫຼື ຝຸ່ນມຶກ;

ການພິມດ້ວຍອັອບແຊັດ (Offset) ໝາຍເຖິງ ການພິມແຍກສີ ດ້ວຍເຄື່ອງພິມທີ່ນໍ້າມຶກສຳຜັດກັບແມ່ພິມ ແລະ ເຈ້ຍໂດຍກົງຜ່ານລູກກິ້ງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

ລັດ ຊຸກຍູ້ ແລະ ສົ່ງເສີມການ ຄົ້ນຄວ້າ, ວິເຄາະ, ວິໄຈ, ພັດທະນາ ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ດ້ວຍການນຳໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ການສ້າງໂຄງລ່າງພື້ນຖານ, ພາຫະນະ ແລະ ວັດຖຸປະກອນ ເຂົ້າໃນວຽກງານດັ່ງກ່າວ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານຄຸ້ມຄອງໄພພິບັດ.

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ, ຄົ້ນຄວ້າ, ວິໄຈ ແລະ ລົງທຶນ ໃສ່ການພັດທະນາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

ລັດ ຊຸກຍູ້, ສົ່ງເສີມການພັດທະນາບຸກຄະລາກອນ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳນານງານເປັນມືອາຊີບ ໃຫ້ສາມາດຮັບໃຊ້ວຽກງານດັ່ງກ່າວ ຢູ່ພາຍໃນ ແລະ ຕ່າງປະເທດ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສະໜອງຂໍ້ມູນທີ່ຖືກຕ້ອງ ໃຫ້ແກ່ການຈັດຕັ້ງເພື່ອສ້າງແຜນທີ່.

**ມາດຕາ 5 ຫຼັກການກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການເຄື່ອນໄຫວວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

- ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
- ຮັບປະກັນອຳນາດອະທິປະໄຕ, ຄວາມເປັນເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ການຮັກສາຄວາມລັບ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
- ຮັບປະກັນການນຳໃຊ້ຂໍ້ມູນເຄົ້າການສຳຫຼວດວັດແທກພື້ນຖານແຫ່ງຊາດ ເຂົ້າໃນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ວຽກສະເພາະຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
- ຮັບປະກັນການດັດແກ້, ການສະໜອງຂໍ້ມູນ-ຂ່າວສານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ສະດວກ ແລະ ທັນເວລາ;
- ປະສານສົມທົບລະຫວ່າງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນການສຳຫຼວດວັດແທກ ແລະ ສ້າງແຜນທີ່;
- ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 ຄວາມຮັບຜິດຊອບກ່ຽວກັບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ ມີຄວາມຮັບຜິດຊອບໃນການກວດກາ ຄຸນນະພາບ ແລະ ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ຂອງຕົນ ຕາມມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຳຫຼວດວັດແທກແລະ ສ້າງແຜນທີ່ ຕ້ອງນຳໃຊ້ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ຕາມມາດຕະຖານເຕັກນິກທີ່ປະກາດໃຊ້ໃນແຕ່ລະໄລຍະ ແລະ ສົ່ງຂໍ້ມູນ, ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຈຳເປັນ ໃຫ້ກະຊວງພາຍໃນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃຫ້ການຮ່ວມມື, ອຳນວຍຄວາມສະດວກ, ສະໜອງຂໍ້ມູນ, ປົກປັກຮັກສາໂຄງລ່າງພື້ນຖານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຫາກບໍ່ປະຕິບັດຕາມມາດຕະຖານເຕັກນິກທີ່ກຳນົດແລ້ວ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຈາກວິຊາການ ຫຼື ເຕັກນິກຂອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຍົກລະດັບຄວາມຮູ້, ຄວາມສາມາດຂອງ

ອ່ານຕໍ່ສະບັບໜ້າ...




# ການປາບໂຈນຜູ້ຮ້າຍ

ໂດຍ: ທິດດີ

ຄັ້ງໜຶ່ງ ສະໄໝທີ່ພະພຸດທະເຈົ້າຍັງມີຊີວິດຢູ່ ພະອົງໄດ້ມີວິທີການແນະນຳບັນດາພວກພາມທັງຫລາຍທີ່ຫລົງເຊື່ອການຂ້າສັດບູຊາຍັນວ່າເປັນຂອງດີເລີດ ແຕ່ພະພຸດທະເຈົ້າ ໄດ້ແນະນຳວິທີການບູຊາຍັນແບບໃໝ່ ເພື່ອໃຫ້ເກີດສິລິມຸງຄຸນແກ່ຕົນເອງ ແລະ ເກີດຄວາມສະຫງົບຮົ່ມເຢັນແກ່ຊາວບ້ານເມືອງ ເລື່ອງນີ້ເກີດຂຶ້ນຢູ່ແຄວ້ນມະຄົດ ທີ່ທູດຕະພາມໄດ້ຖາມພະພຸດທະເຈົ້າເຖິງວິທີບູຊາຍັນທີ່ຖືກຕ້ອງ.

ພະພຸດທະເຈົ້າໄດ້ຕອບວ່າ: ຄັ້ງໜຶ່ງ ເຄີຍມີມາແລ້ວທີ່ພະເຈົ້າຊີວິດຕະລາດໄດ້ປະຕິບັດການບູຊາຍັນທີ່ຖືກຕ້ອງດ້ວຍວິທີການດັ່ງນີ້:

ແບບຖອນຮາກຖອນໂຄນ ເພື່ອບໍ່ໃຫ້ກັບມາເປັນສ້ຽນໜາມເປັນໂຈນອີກໄດ້ແກ່:

1. ໄດ້ໃຫ້ທານບັນດາພັນພືດກະເສດປູກຝັງແກ່ຜູ້ດຸໝັ່ນເຮັດການກະເສດ.

2. ໄດ້ແຈກຢາຍຕົ້ນທຶນ(ເງິນ) ແກ່ພໍ່ຄ້າຊາວຂາຍຜູ້ມັກຮັກໃນການຄ້າຂາຍ.

3. ໄດ້ໃຫ້ທານແຈກຢາຍອາຫານ ແລະ ເງິນເດືອນແກ່ພະນັກງານທີ່ດຸໝັ່ນຕໍ່ໜ້າທີ່ວຽກງານ.

ວິທີການປາບໂຈນຂອງເຈົ້າຊີວິດຕະລາດນີ້ ພະພຸດທະເຈົ້າໄດ້ເລົ່າສູ່ພາມຟັງ ເຊິ່ງມີຈຸດມຸ່ງໝາຍປະຕິວັດແນວຄິດຈາກຂ້າສັດບູຊາຍັນ ປ່ຽນມາເປັນການແກ້ໄຂບັນຫາເສດຖະກິດໃຫ້ປະຊາຊົນໄດ້ມີວິຖີຊີວິດຄ້າຂາຍ-ປູກຝັງມີທີ່ຢູ່ອາໄສທຳມາຫາລ້ຽງຊີບ ເມື່ອທຸກຄົນມີອາຊີບ ວິທີປາບໂຈນແບບນີ້ຖືວ່າໄດ້ຜົນ.

ປະເດັນສຳຄັນຂອງວິທີການສອນແບບປະຕິບັດແນວຄິດເດີມເລື່ອງປາບໂຈນດ້ວຍວິທີເດີມຄືຈັບກຸມຄຸມຂັງ; ປັບໃໝໃສ່ໂທດ... ບໍ່ແມ່ນການແກ້ບັນຫາຕົ້ນເຫດ ແຕ່ໃຫ້ຫັນມາສົ່ງເສີມຊາວບ້ານດ້ວຍການໃຫ້ເມັດພືດພັນກະເສດ, ໃຫ້ທຶນການຄ້າ, ໃຫ້ອາຫານເງິນເດືອນ ແລະ ລາງວັນແກ່ຄົນດີ, ການບູຊາຍັນດ້ວຍການປ່ຽນແນວຄິດເດີມ ຂ້າສັດຕັດຊີວິດຈຶ່ງບໍ່ແມ່ນທາງອອກທີ່ດີ ແຕ່ການຫັນມາສົ່ງເສີມໃຫ້ມີທຶນການຄ້າ-ໃຫ້ແນວທາງທີ່ຖືກຕ້ອງຕ່າງຫາກ ຈຶ່ງໄດ້ຜົນດີ ເຊິ່ງສຳຄັນຢູ່ທີ່ວິທີຄິດ-ວິທີການຖືກຕ້ອງ ຫລື ບໍ່?




**ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

ການອະທິບາຍຄຳສັບ ໃນມາດຕາ 3 (ໃໝ່) ຂອງກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (ສະບັບປັບປຸງ) ມີທັງໝົດ 3 ຂໍ້. ໜັງສືພິມຜູ້ແທນປະຊາຊົນ ສະບັບນີ້ ຈະນຳສະເໜີຕໍ່ບັນດາທ່ານຜູ້ອ່ານ 2 ຂໍ້ ແລະ ອີກ 1 ຂໍ້ ຈະພິມໃນສະບັບຕໍ່ໆໄປ

1. ພະຍາດອາດຍາສິດ ໝາຍເຖິງການໃຊ້ອຳນາດບັງຄັບເກີນພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

2. ການສໍ້ລາດບັງຫລວງ ໝາຍເຖິງ ການຍັກຍອກຊັບ, ການສໍ້ໂກງຊັບຂອງລັດ ຫລື ລວມໝູ່, ການໃຫ້ສິນບົນ, ການຮັບສິນບົນ, ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫລື ບຸກຄົນ.

# ປະມວນຮູບພາບພິທີມອບປະລິນຍາສະດຸດີບັນດິດ ກິດຕິມະສັກ ສາຂາພຸດທະສາສະໜາໃຫ້ແກ່ ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ






















**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ
ທ່ານ ເປຄຳ ລໍຄຳສອນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ